## ສັນຍາວ່າດ້ວຍ ອຸປະສັກທາງດ້ານເຕັກນິກ ຕໍ່ ການຄ້າ

ບັນດາປະເທດສະມາຊິກ,

ໂດຍຄໍານຶງເຖິງ ການເຈລະຈາການຄ້າຫຼາຍຝ່າຍຮອບອຸຣຸກວາຍ;

ດ້ວຍຄວາມປາຖະໜາ ທີ່ຈະຜັນຂະຫຍາຍວັດຖຸປະສົງຂອງ GATT 1994;

ໂດຍເຫັນໄດ້ວ່າ ການປະກອບສ່ວນທີ່ສໍາຄັນ ຂອງມາດຕະຖານສາກົນ ແລະ ລະບົບການ ປະເມີນຄວາມສອດຄ່ອງສາມາດເກີດຂຶ້ນໄດ້ໃນວຽກນີ້ ໂດຍການປັບປຸງປະສິດທິພາບຂອງການຜະລິດ ແລະ ອໍານວຍຄວາມສະດວກຕໍ່ການດໍາເນີນການຄ້າລະຫວ່າງປະເທດ;

ດັ່ງນັ້ນ, ດ້ວຍຄວາມປາຖະໜາ ທີ່ຈະສົ່ງເສີມການພັດທະນາມາດຕະຖານສາກົນ ແລະ ລະບົບ ການປະເມີນຄວາມສອດຄ່ອງ;

ຢ່າງໃດກໍຕາມ, ດ້ວຍຄວາມປາຖະໜາ ທີ່ຈະຮັບປະກັນວ່າ ລະບຽບການ ແລະ ມາດຕະຖານດ້ານເຕັກນິກ, ລວມເຖິງ ລະບຽບການກ່ຽວກັບການບັນຈຸຫີບຫໍ່, ການໃສ່ກາໝາຍ ແລະ ຄວາມຕ້ອງການໃຫ້ຕິດສະຫຼາກ, ແລະ ວິທີ ຂັ້ນຕອນການປະເມີນຄວາມສອດຄ່ອງ ທີ່ກ່ຽວຂ້ອງກັບ ລະບຽບການ ແລະ ມາດຕະຖານທາງດ້ານເຕັກນິກ ຈະບໍ່ສ້າງອຸປະສັກທີ່ບໍ່ຈໍາເປັນຕໍ່ການຄ້າລະຫວ່າງປະເທດ;

ໂດຍເຫັນໄດ້ວ່າ ຈະບໍ່ມີປະເທດສະມາຊິກໃດ ຖືກກີດກັນຈາກການໃຊ້ມາດຕະການຕ່າງໆທີ່ ຈ□າເປັນ ເພື່ອຮັບປະກັນຄຸນະພາບຂອງການສົ່ງອອກ, ຫຼື ເພື່ອປົກປ້ອງຊີວິດ ຫຼື ສຸຂະພາບຂອງຄົນ, ສັດ ຫຼື ພືດ, ສິ່ງແວດລ້ອມ, ຫຼື ເພື່ອເປັນການປ້ອງກັນການຫຼອກລວງ ໃນລະດັບທີ່ ພິຈາລະນາເຫັນວ່າເໝາະສົມ ພາຍໃຕ້ຄວາມຮຽກຮ້ອງຕ້ອງການທີ່ວ່າ ມາດຕະການເຫຼົ່ານີ້ ຈະບໍ່ຖືກນໍາໃຊ້ໃນລັກສະນະທີ່ເລືອກ ປະຕິບັດຕາມໃຈ ຫຼື ບໍ່ສາມາດອະທິບາຍໄດ້ຢ່າງສົມເຫດສົມຜົນ ກັບປະເທດຕ່າງໆ ທີ່ມີເງື່ອນໄຂຄືກັນ ຫຼື ໃຊ້ມາດຕະການເພື່ອຈໍາກັດການຄ້າລະຫວ່າງປະເທດແບບເຊື່ອງຊ້ອນ ແລະ ຖ້າຫາກບໍ່ເປັນຄືແນວນັ້ນ, ຈະກະທໍາໄດ້ກໍຕໍ່ເມື່ອມາດຕະການເຫຼົ່ານັ້ນສອດຄ່ອງກັບບົດບັນຍັດຂອງສັນຍາສະບັບນີ້;

ໂດຍເຫັນໄດ້ວ່າ ຈະບໍ່ມີປະເທດສະມາຊິກໃດ ຖືກກີດກັນຈາກການໃຊ້ມາດຕະການທີ່ຈໍາເປັນ ຕໍ່ການປົກປ້ອງຜົນປະໂຫຍດທີ່ສໍາຄັນຍິ່ງດ້ານຄວາມໝັ້ນຄົງ;

ໂດຍເຫັນໄດ້ວ່າ ມາດຕະຖານລະຫວ່າງປະເທດເປັນສ່ວນປະກອບໃນການເຮັດໃຫ້ມີການຖ່າຍທອດເຕັກໂນໂລຊີຈາກປະເທດທີ່ພັດທະນາແລ້ວ ໄປສູ່ປະເທດທີ່ກໍາລັງພັດທະນາ;

ໂດຍເຫັນໄດ້ວ່າ ປະເທດກໍາລັງພັດທະນາອາດຈະປະສົບກັບຄວາມຫຍຸ້ງຍາກເປັນພິເສດ ໃນການສ້າງຮູບແບບ ແລະ ການນໍາໃຊ້ລະບຽບການດ້ານເຕັກນິກແລະ ມາດຕະຖານ, ພ້ອມທັງ ຂັ້ນຕອນໃນການປະເມີນຄວາມສອດຄ່ອງກັບລະບຽບການດ້ານເຕັກນິກ ແລະ ມາດຕະຖານເຫຼົ່ານັ້ນ, ແລະ ດ້ວຍຄວາມປາຖະໜາທີ່ຈະຊ່ວຍເຫຼືອບັນດາປະເທດກໍາລັງພັດທະນາໃນຄວາມພະຍາຍາມກ່ຽວກັບວຽກງານນີ້;

ຈຶ່ງໄດ້ຕົກລົງກັນ ດັ່ງຕໍ່ໄປນີ້:

### ມາດຕາ 1

### ບົດບັນຍັດທົ່ວໄປ

1.1 ຄໍາສັບທົ່ວໄປ ກ່ຽວກັບ ການກໍານົດມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ, ໂດຍປົກກະຕິ, ຈະໃຊ້ຕາມຄວາມໝາຍຕາມຄໍານິຍາມທີ່ໃຊ້ຢູ່ໃນລະບົບອົງການສະຫະປະຊາຊາດ ແລະ ອົງການກໍານົດມາດຕະຖານລະຫວ່າງປະເທດ ໂດຍໃຫ້ຄວາມສໍາຄັນທາງດ້ານເນື້ອໃນ, ວັດຖຸປະສົງ ແລະຈຸດປະສົງຂອງສັນຍາ ສະບັບນີ້.

1.2 ເຖິງຢ່າງໃດກໍຕາມ, ເພື່ອຈຸດປະສົງຂອງສັນຍາສະບັບນີ້, ຄວາມໝາຍຂອງຄໍາສັບໄດ້ລະບຸໄວ້ ຢູ່ໃນເອກະສານຊ້ອນທ້າຍ 1.

1.3 ບົດບັນຍັດຂອງສັນຍາສະບັບນີ້ໄດ້ຄອບຄຸມທຸກລາຍການສິນຄ້າ ລວມທັງ ສິນຄ້າອຸດສາຫະກໍາ ແລະ ສິນຄ້າກະສິກໍາ.

1.4 ການຈັດຊື້ສິນຄ້າທີ່ມີລັກສະນະສະເພາະໃດໜຶ່ງ ໂດຍອົງການຂອງລັດ ສ□າລັບການຜະລິດ ຫຼື ການບໍລິໂພກຂອງອົງການລັດຖະບານ ຈະບໍ່ຢູ່ພາຍໃຕ້ບົດບັນຍັດຂອງສັນຍາສະບັບນີ້, ແຕ່ວ່າ ຈະຖືກບັນຍັດໄວ້ໃນສັນຍາການຈັດຊື້ຂອງລັດຖະບານ ຊຶ່ງສອດຄ່ອງກັບຂອບເຂດຂອງສັນຍາດັ່ງກ່າວ.

1.5 ບົດບັນຍັດຂອງສັນຍາສະບັບນີ້ ຈະບໍ່ນຳໃຊ້ກັບມາດຕະການສຸຂາອະນາໄມແລະສຸຂະອະນາໄມພືດ ຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ A ຂອງສັນຍາວ່າດ້ວຍ ການນຳໃຊ້ມາດຕະການ ສຸຂະອະນາໄມ ແລະ ສຸຂະອະນາໄມພືດ.

1.6 ການອ້າງອີງທັງໝົດ ໃນສັນຍາສະບັບນີ້ ກ່ຽວກັບ ລະບຽບການດ້ານເຕັກນິກ, ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ ຈະຖືກຕ◌ິຄວາມໝາຍວ່າ ລວມທຸກການດັດແປງແກ້ໄຂ ຫຼື ການເພີ່ມຕື່ມໃສ່ກົດລະບຽບ ຫຼື ການຄອບຄຸມຂອງລາຍການສິນຄ້າດ້ວຍ, ເວັ້ນເສຍແຕ່ ການດັດແປງແກ້ໄຂ ຫຼື ການເພີ່ມຕື່ມເຂົ້າໃນສ່ວນທີ່ບໍ່ສຳຄັນ.

ລະບຽບການດ້ານເຕັກນິກ ແລະ ມາດຕະຖານ

## ມາດຕາ 2

**ການກະກຽມ, ການປະກາດໃຊ້ ແລະ ການນຳໃຊ້ລະບຽບການທາງດ້ານເຕັກນິກ ໂດຍອົງການລັດຂັ້ນສູນກາງ**

ໃນສ່ວນທີ່ກ່ຽວກັບອົງການລັດຂັ້ນສູນກາງ:

2.1 ບັນດາປະເທດສະມາຊ◌ິກຈະຕ້ອງຮັບປະກັນວ່າ ໃນພາກສ່ວນທີ່ກ່ຽວກັບລະບຽບການທາງດ້ານເຕັກນິກ, ສິນຄ້າທີ່ມີການນຳເຂົ້າຈາກປະເທດສະມາຊິກໃດໆ ຈະຕ້ອງໄດ້ຮັບການປະຕິບັດແບບອະນຸເຄາະ (ພິເສດ) ທີ່ບໍ່ດ້ອຍກວ່າ ການປະຕິບັດກັບສິນຄ້າທີ່ຄ້າຍຄືກັນ ຊຶ່ງມີແຫຼ່ງກຳເນີດໃນປະເທດຕົນ ແລະ ສິນຄ້າທີ່ຄ້າຍຄືກັນ ຊຶ່ງມີແຫ◌຺◌່ງກຳເນີດຈາກປະເທດສະມາຊິກອື່ນ.

2.2 ບັນດາປະເທດສະມາຊິກ ຈະຕ້ອງຮັບປະກັນວ່າ ລະບຽບການດ້ານເຕັກນິກ ບໍ່ໄດ້ຖືກກຽມ, ປະກາດໃຊ້ ຫຼື ນຳໃຊ້ ໃນລັກສະນະ ຫຼື ເປັນຜ◌ົນກະທົບເພື່ອສ້າງເປັນອຸປະສັກທີ່ບໍ່ຈຳເປັນ ຕໍ່ ການຄ້າ ລະຫວ່າງປະເທດ. ເພື່ອຈຸດປະສົງນີ້, ລະບຽບການທາງດ້ານເຕັກນິກ ຈະບໍ່ເປັນການຈຳກັດການຄ້າເກີນຄວາມຈຳເປັນ ໃນການບັນລຸວັດຖຸປະສົງທີ່ຊອບທຳ ໂດຍໃຫ້ຄວາມສຳຄັນຕໍ່ຄວາມສ່ຽງທີ່ອາດເກີດຂຶ້ນໄດ້ຂອງການບໍ່ບັນລຸວັດຖຸປະສົງທີ່ຊອບທຳນັ້ນ. ວັດຖຸປະສົງທີ່ຊອບທຳນັ້ນ ແມ່ນ ລວມເຖິງ ລະບຽບການກ່ຽວກັບຄວາມໝັ້ນຄົງຂອງຊາດ, ການປ້ອງກັນການປະຕິບັດທີ່ຫຼອກລວງ, ການປົກປ້ອງສຸຂະພາບ ຫຼື ຄວາມປອດໄພຂອງຄົນ, ສັດ ຫຼື ພືດພັນ ຫຼື ສິ່ງແວດລ້ອມ.ໃນການປະເມີນຄວາມສ່ຽງນັ້ນ, ອົງປະກອບ ທີ່ກ່ຽວຂ້ອງໃນການພິຈາລະນາ ແມ່ນລວມທັງ ຂໍ້ມູນທາງດ້ານວິຊາການ ແລະ ວິທະຍາສາດ, ເຕັກໂນໂລຊີແປຮູບທີ່ກ່ຽວຂ້ອງ ຫຼື ຄວາມຕັ້ງໃຈໃນການນຳໃຊ້ສິນຄ້າຂັ້ນສຸດທ້າຍ.

2.3 ລະບຽບການທາງດ້ານເຕັກນິກ ບໍ່ຄວນຈະຮັກສາໄວ້ ຖ້າຫາກ ສະຖານະການ ຫຼື ວັດຖຸປະສົງຂອງການອອກລະບຽບການບໍ່ມີອີກຕໍ່ໄປ ຫຼື ຖ້າສະຖານະການ ຫຼື ວັດຖຸປະສົງທີ່ປ່ຽນແປງໄປ ສາມາດ ຮັກສາໄວ້ໄດ້ ໃນຮູບແບບການຈຳກັດການຄ້າໃຫ້ໜ້ອຍລົງ.

2.4 ໃນກໍລະນີທີ່ຕ້ອງມີລະບຽບການທາງດ້ານເຕັກນິກ ແລະ ໃນເມື່ອມີມາດຕະຖານສາກົນທີ່ກ່ຽວຂ້ອງ ທີ່ມີຢູ່ແລ້ວ ຫຼື ກຳລັງຈະສຳເລັດໃນໄວໆນີ້, ປະເທດສະມາຊິກ ຄວນຈະນຳໃຊ້ລະບຽບການເຫຼົ່ານັ້ນ, ຫຼື ບາງສ່ວນທີ່ກ່ຽວຂ້ອງ ເພື່ອເປັນພື້ນຖານສຳລັບການອອກລະບຽບການທາງດ້ານເຕັກນິກ, ຍົກເວັ້ນ ໃນກໍລະນີ ທີ່ມາດຕະຖານສາກົນ ຫຼື ບາງສ່ວນທີ່ກ່ຽວຂ້ອງນັ້ນ ແມ່ນບໍ່ມີຜົນບັງຄັບໃຊ້ ຫຼື ບໍ່ເໝາະສົມສຳລັບ ການບັນລຸຈຸດປະສົງອັນຊອບທຳ, ຕົວຢ່າງ: ເນື່ອງຈາກປັດໄຈພື້ນຖານກ່ຽວກັບອ◌ຸນຫະພູມ ຫຼື ທາງດ້ານ ພູມສາດ ຫຼື ບັນຫາຫຍຸ້ງຍາກພື້ນຖານທາງດ້ານເຕັກໂນໂລຊີ.

2.5 ປະເທດສະມາຊິກທີ່ກຳລັງກຽມ, ຈະປະກາດໃຊ້ ຫຼື ຈະນຳໃຊ້ ລະບຽບການທາງດ້ານເຕັກນິກ ຊຶ່ງອາດຈະມີຜົນກະທົບຕໍ່ການຄ້າຢ່າງສຳຄັນຂອງປະເທດອື່ນ.ອີງຕາມການຮ້ອງຂໍຂອງປະເທດສະມາຊິກ ອື່ນໆ, ປະເທດສະມາຊິກຄວນຈະອະທິບາຍ ກ່ຽວກັບຄວາມຊອບທຳໃນການນຳໃຊ້ລະບຽບການທາງດ້ານເຕັກນິກ ຕາມບົດບັນຍັດ ວັກ 2 ເຖິງ 4. ເມື່ອໃດກໍ່ຕາມ ທີ່ລະບຽບການທາງດ້ານ ເຕັກນິກຖືກກຽມ, ປະກາດໃຊ້ ຫຼື ນຳໃຊ້ ສຳລັບວັດຖຸປະສົງໃດໜຶ່ງທີ່ຊອບທຳຢ່າງຈະແຈ້ງ ຊຶ່ງຖືກລະບຸໄວ້ໃນວັກ 2 ແລະ ສອດຄ່ອງກັບມາດຕະຖານສາກົນທີ່ກ່ຽວຂ້ອງ, ຂໍ້ກຳນົດນັ້ນ ຈະຖືກສັນນິຖານວ່າ ຈະບໍ່ສ້າງອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າລະຫວ່າງປະເທດ.

2.6 ໃນທັດສະນະກ່ຽວກັບຄວາມເປັນເອກະພາບຂອງລະບຽບການທາງດ້ານເຕັກນິກບົນພື້ນຖານທົ່ວໄປ ເທົ່າທີ່ຈະເປັນໄປໄດ້, ອີງຕາມຂໍ້ຈຳກັດທາງດ້ານຊັບພະຍາກອນ, ປະເທດສະມາຊິກ ຄວນມີບົດ ບາດຢ່າງເຕັມສ່ວນ ໃນການກະກຽມນຳໃຊ້ມາດຕະຖານສາກົນ ທີ່ຖືກກຳນົດໂດຍອົງການມາດຕະຖານ ສາກົນລະຫວ່າງປະເທດທີ່ເໝາະສົມ ເພື່ອນຳໃຊ້ລະບຽບການສຳລັບສິນຄ້າ ຊຶ່ງໄດ້ປະກາດໃຊ້ ຫຼື ຄາດວ່າຈະອອກ ລະບຽບການທາງດ້ານເຕັກນິກກັບສິນຄ້າ.

2.7 ປະເທດສະມາຊິກຄວນໃຫ້ການພິຈາລະນາໃນທາງສ້າງສັນ ກ່ຽວກັບການຍອມຮັບ ລະບຽບການທາງດ້ານເຕັກນິກຂອງປະເທດສະມາຊິກອື່ນໆໃຫ້ເທົ່າທຽມກັນກັບຂອງຕົນ, ເຖິງແມ່ນວ່າ ລະບຽບການເຫຼົ່ານີ້ແຕກຕ່າງຈາກ ລະບຽບການຂອງຕົນກໍຕາມ, ໂດຍທີ່ປະເທດສະມາຊິກພໍໃຈວ່າ ລະບຽບການເຫຼົ່ານີ້ ບັນລຸວັດຖຸປະສົງ ຕາມ ລະບຽບການຂອງຕົນຢ່າງພຽງພໍ.

2.8 ເມື່ອໃດທີ່ມີຄວາມເໝາະສົມ, ປະເທດສະມາຊິກຄວນຈະລະບຸ ລະບຽບການທາງດ້ານເຕັກນິກ ໂດຍຢູ່ບົນພື້ນຖານຄຸນສົມບັດຂອງຜະລິດຕະພັນ ໃນດ້ານການໃຊ້ປະໂຫຍດຫຼາຍກວ່າ ການອອກແບບ ຫຼື ລັກສະນະພາຍນອກ.

2.9 ໃນກໍລະນີທີ່ບໍ່ມີມາດຕະຖານສາກົນທີ່ກ່ຽວຂ້ອງ ຫຼື ເນື້ອໃນຂອງລະບຽບການທາງດ້ານເຕັກນິກທີ່ສະເໜີບໍ່ສອດຄ່ອງກັບ ເນື້ອໃນທາງດ້ານເຕັກນິກຂອງມາດຕະຖານສາກົນທີ່ກ່ຽວຂ້ອງ, ແລະ ຖ້າ ລະບຽບການທາງດ້ານເຕັກນິກອາດມີຜົນກະທົບຢ່າງສຳຄັນຕໍ່ການຄ້າຂອງປະເທດສະມາຊິກອື່ນໆ,ບັນດາປະເທດສະມາຊິກຄວນຈະ:

2.9.1 ພິມປະກາດເຜີຍແຜ່ໃນສື່ພິມຕ່າງໆ ກ່ອນເວລາອັນຄວນ, ໃນລັກສະນະທີ່ສາມາດເຮັດໃຫ້ຜູ້ທີ່ສົນໃຈຂອງປະເທດສະມາຊິກອື່ນໆມີຄວາມຄຸ້ນເຄີຍ ເພື່ອໃຫ້ຮູ້ຈັກ ວ່າ ຈະໄດ້ມີການສະເໜີ ນຳໃຊ້ ລະບຽບການທາງດ້ານເຕັກນິກສະເພາະໃດໜຶ່ງ;

2.9.2 ແຈ້ງການໃຫ້ກັບປະເທດສະມາຊິກອື່ນຜ່ານກອງເລຂາອົງການການຄ້າໂລກ ກ່ຽວກັບ ລາຍການສິນຄ້າທີ່ຄອບຄຸມໃນລະບຽບການທາງດ້ານເຕັກນິກທີ່ສະເໜີມາ, ພ້ອມທັງ ແຈ້ງວັດຖຸປະສົງ ແລະ ເຫດຜົນໂດຍຫຍໍ້. ການແຈ້ງການນີ້, ຄວນຈະເກີດຂຶ້ນກ່ອນເວລາອັນຄວນ, ເມື່ອຫາກມີການປັບປຸງແກ້ໄຂ ກໍສາມາດເຮັດໄດ້ ແລະ ນຳຄຳເຫັນຕ່າງໆມາພິຈາລະນາ ຕື່ມໄດ້.

2.9.3. ໂດຍອີງໃສ່ການຮ້ອງຂໍ, ການສະໜອງ ສຳເນົາກ່ຽວກັບ ລະບຽບການທາງດ້ານເຕັກນິກທີ່ສະເໜີມາ ຫຼື ຂໍ້ມູນລະອຽດໃຫ້ກັບປະເທດສະມາຊິກອື່ນໆ ແລະ, ຖ້າຫາກເປັນໄປໄດ້, ຈົ່ງຊີ້ໃຫ້ເຫັນສ່ວນທີ່ມີເນື້ອໃນແຕກຕ່າງຢ່າງຫຼວງຫຼາຍ ຈາກມາດຕະຖານສາກົນທີ່ກ່ຽວຂ້ອງ.

2.9.4 ໂດຍບໍ່ມີການຈຳແນກ, ໃຫ້ເວລາທີ່ເໝາະສົມສຳລັບປະເທດສະມາຊິກອື່ນ ໃນການ ປະກອບຄຳເຫັນເປັນລາຍລັກອັກສອນ, ປຶກສາຫາລື ຕໍ່ຄຳເຫັນເຫຼົ່ານີ້ ໂດຍອີງຕາມການຮ້ອງຂໍ, ແລະ ນຳເອົາຄຳເຫັນທີ່ເປັນລາຍລັກອັກສອນນີ້ ແລະ ຜົນຂອງການປຶກສາຫາລືນັ້ນ ມາ ພິຈາລະນາ.

2.10 ອີງໃສ່ບົດບັນຍັດໃນບົດນຳຂອງ ວັກທີ 9, ໃນກໍລະນີ ເມື່ອມີບັນຫາຮີບດ່ວນກ່ຽວກັບຄວາມປອດໄພ, ສຸຂະພາບ, ການປົກປ◌້ອງສິ່ງແວດລ້ອມ ຫຼື ຄວາມໝັ້ນຄົງຂອງຊາດເກີດຂຶ້ນ ຫຼື ມີໄພຄຸກຄາມທີ່ຈະເກີດຂຶ້ນ ກັບປະເທດສະມາຊິກໃດໜຶ່ງ, ປະເທດສະມາຊິກນັ້ນ ອາດຈະ ບໍ່ປະຕິບັດຕາມຂັ້ນຕອນທີ່ ລະບຸໃນຂໍ້ກຳນົດວັກທີ 9 ຖ້າເຫັນວ່າ ມີຄວາມຈຳເປັນ ໂດຍມີເຫດຜົນວ່າ ໃນການປະກາດໃຊ◌້ ລະບຽບການທາງດ້ານເຕັກນິກສະມາຊິກຈະຕ້ອງ:

2.10.1 ແຈ້ງການໃຫ້ກັບບັນດາປະເທດສະມາຊິກ ທັນທີ ຜ່ານກອງເລຂາອ◌ົງການການຄ້າໂລກ ກ່ຽວກັບ ລະບຽບການ ທາງດ້ານເຕັກນິກສະເພາະນັ້ນ ແລະ ລາຍການສິນຄ້າທີ່ຄອບຄຸມ, ພ້ອມກັບ ແຈ້ງວັດຖຸປະສົງ ແລະ ເຫດຜົນໂດຍຫຍໍ້ຂອງ ລະບຽບການ ທາງດ້ານເຕັກນິກນັ້ນ, ລວມທັງ ລັກສະນະຂອງບັນຫາຮີບດ່ວນ;

2.10.2 ໂດຍອີງໃສ່ການຮ້ອງຂໍ, ສະໜອງສຳເນົາກ່ຽວກັບ ລະບຽບການທາງດ້ານເຕັກນິກໃຫ້ກັບບັນດາປະເທດສະມາຊິກອື່ນໆ.

2.10.3 ໂດຍບໍ່ມີການຈຳແນກ, ອະນຸຍາດໃຫ້ບັນດາປະເທດສະມາຊິກອື່ນ ສະແດງຄຳຄິດເຫັນເປັນລາຍລັກອັກສອນ, ປຶກສາຫາລືຄຳເຫັນນັ້ນ ບົນພື້ນຖານການຮ້ອງຂໍ, ແລະ ນຳເອົາຄຳເຫັນທີ່ເປັນລາຍລັກອັກສອນ ແລະ ການປຶກສາຫາລືນັ້ນ ມາພິຈາລະນາ.

2.11 ປະເທດສະມາຊິກຕ້ອງຮັບປະກັນວ່າ ທຸກລະບຽບການທາງດ້ານເຕັກນິກທີ່ໄດ້ຖືກປະກາດໃຊ້ ຕ້ອງຖືກພິມເຜີຍແຜ່ທັນທີ ຫຼື ບໍ່ດັ່ງນັ້ນ, ຈະຕ້ອງໃຫ້ມີໄວ້ໃນລັກສະນະທີ່ຜູ້ສົນໃຈໃນປະເທດສະມາຊິກອື່ນໆ ມີຄວາມຄຸ້ນເຄີຍກັບຂໍ້ກຳນົດເຫຼົ່ານັ້ນ.

2.12 ນອກຈາກໃນສະຖານະການຮີບດ່ວນ ໂດຍອີງໃສ່ ວັກ 10, ປະເທດສະມາຊິກຕ້ອງອະນຸຍາດໃຫ້ມີໄລຍະເວລາທີ່ສົມເຫດຜົນ ລະຫວ່າງເວລາການພິມເຜີຍແຜ່ ລະບຽບການທາງດ້ານເຕັກນິກນັ້ນ ແລະ ເວລາທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ເວລາແກ່ຜູ້ຜະລິດໃນປະເທດທີ່ສົ່ງອອກ, ໂດຍສະເພາະປະເທດ ສະມາຊິກທີ່ເປັນປະເທດກຳລັງພັດທະນາ, ໃນການປັບປຸງສິນຄ້າ ແລະ ວິທີການຜະລິດເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງປະເທດທີ່ນຳເຂົ້າ.

**ມາດຕາ 3**

**ການກະກຽມ, ການປະກາດໃຊ້ ແລະ ການນຳໃຊ້ ລະບຽບການທາງດ້ານເຕັກນິກ ໂດຍບັນດາ ໜ່ວຍງານຂອງລັດຂັ້ນທ້ອງຖິ່ນ ແລະ ໜ່ວຍງານທີ່ບໍ່ແມ່ນລັດ**

ອີງໃສ່ ບັນດາໜ່ວຍງານຂອງລັດຂັ້ນທ້ອງຖິ່ນ ແລະ ໜ່ວຍງານທີ່ບໍ່ແມ່ນລັດ ພາຍໃນອານາເຂດ:

3.1 ປະເທດສະມາຊິກຈະຕ້ອງນຳໃຊ້ມາດຕະການທີ່ສົມເຫດສົມຜົນທີ່ພວກເຂົາອາດຈະມີນັ້ນ ເພື່ອໃຫ້ໝັ້ນໃຈໃນການປະຕິບັດຕາມ ຂໍ້ກຳນົດໃນ ມາດຕາ 2 ຂອງໜ່ວຍງານນັ້ນໆ, ໂດຍການຍົກເວັ້ນຂອງ ຂໍ້ບັງຄັບ ກ່ຽວກັບການແຈ້ງໃຫ້ຊາບ ຕາມວັກ 2.9.2 ແລະ 2.10.1 ຂອງມາດຕາ 2.

3.2 ປະເທດສະມາຊິກຕ້ອງຮັບປະກັນວ່າ ລະບຽບການທາງດ້ານເຕັກນິກຕ່າງໆ ຂອງອົງການ ລັດຂັ້ນທ້ອງຖິ່ນ ຢູ່ໃນລະດັບທີ່ຕ່ຳກວ່າ ລະບຽບການທີ່ອອກໂດຍ ລັດຖະບານຂັ້ນສູນກາງຂອງປະເທດ ສະມາຊິກນັ້ນ ໄດ້ຖືກແຈ້ງໃຫ້ຊາບ ໂດຍອີງຕາມບົດບັນຍັດໃນວັກ 2.9.2 ແລະ 2.10.1 ຂອງ ມາດຕາ 2. ເປັນທີ່ສັງເກດວ່າ ການແຈ້ງການຈະບໍ່ຖືກຮຽກຮ້ອງ, ເມື່ອ ລະບຽບການທາງດ້ານເຕັກນິກ ແລະ ເນື້ອໃນດ້ານເຕັກນິກສ່ວນໃຫຍ່ຄືກັນ ກັບ ລະບຽບການທາງດ້ານເຕັກນິກທີ່ອອກກ່ອນໜ້ານີ້ ໂດຍ ອົງການລັດ ຂັ້ນສູນກາງຂອງປະເທດສະມາຊິກທີ່ກ່ຽວຂ້ອງ.

3.3 ປະເທດສະມາຊິກ ອາດຈະຮ້ອງຂໍ ການຕິດຕໍ່ກັບປະເທດສະມາຊິກອື່ນ, ລວມທັງ ການແຈ້ງການ, ບົດບັນຍັດກ່ຽວກັບຂໍ້ມູນ, ຄຳຄິດເຫັນ ແລະ ການປຶກສາຫາລື ໂດຍອີງຕາມວັກ 2.9 ແລະ 2.10 ຂອງ ມາດຕາ 2, ຂໍຜ່ານອົງການລັດຂັ້ນສູນກາງ.

3.4 ປະເທດສະມາຊິກບໍ່ຄວນໃຊ້ມາດຕະການ ຊຶ່ງ ຮຽກຮ້ອງ ຫຼື ຊຸກຍູ້ ໜ່ວຍງານຂອງລັດຂັ້ນທ້ອງຖິ່ນ ຫຼື ໜ່ວຍງານທີ່ບໍ່ແມ່ນລັດ ພາຍໃນອານາເຂດຂອງຕົນ ເພື່ອດຳເນີນການໃນລັກສະນະທີ່ບໍ່ສອດຄ່ອງກັບບົດບັນຍັດໃນມາດຕາ 2.

3.5 ປະເທດສະມາຊິກ ຕ້ອງຮັບຜິດຊອບທັງໝົດ ພາຍໃຕ້ສັນຍາສະບັບນີ້ ກ່ຽວກັບການຕິດຕາມ ສັງເກດການ ໃນການປະຕິບັດທຸກບົດບັນຍັດໃນມາດຕາ 2 . ປະເທດສະມາຊິກ ຄວນສ້າງຮູບແບບ ແລະ ຈັດຕັ້ງປະຕິບັດ ມາດຕະການໃນທາງສ້າງສັນ ແລະ ກົນໄກ ການສະໜັບສະໜູນ ການຕິດຕາມສັງເກດການໃນການປະຕິບັດ ບົດບັນຍັດຂອງມາດຕາ 2 ຂອງໜ່ວຍງານຂອງລັດອື່ນ ທີ່ນອກເໜືອຈາກອົງການລັດຂັ້ນສູນກາງ.

**ມາດຕາ 4**

**ການກະກຽມ, ການປະກາດໃຊ້ ແລະ ການນຳໃຊ້ ກ່ຽວກັບມາດຕະຖານ**

4.1 ສະມາຊິກຕ້ອງຮັບປະກັນວ່າ ໜ່ວຍງານມາດຕະຖານຂອງລັດຂັ້ນສູນກາງ ໄດ້ຍອມຮັບ ແລະ ເຮັດໃຫ້ສອດຄ່ອງກັບ ຫຼັກເກນ ວ່າດ້ວຍ ການປະຕິບັດທີ່ດີ (Code of Good Practice)ໃນການກະກຽມ, ການປະກາດໃຊ້ ແລະ ການນຳໃຊ້ ກ່ຽວກັບ ມາດຕະຖານ ຕາມເອກະສານຊ້ອນທ້າຍ 3 ຂອງສັນຍາ ສະບັບນີ້ (ການອ້າງເຖິງໃນສັນຍານີ້ ແມ່ນ "ຫຼັກເກນວ່າດ້ວຍ ການປະຕິບັດທີ່ດີ"). ປະເທດສະມາຊິກຈະຕ້ອງນຳໃຊ້ມາດຕະການທີ່ສົມເຫດຜົນນັ້ນ ຊຶ່ງອາດຈະມີຢູ່ໃນການທີ່ຈະຮັບປະກັນວ່າ ໜ່ວຍງານ ມາດຕະຖານຂອງລັດຂັ້ນທ້ອງຖິ່ນ ຫຼື ໜ່ວຍງານທີ່ບໍ່ແມ່ນລັດ ທີ່ຢູ່ພາຍໃນອານາເຂດຂອງຕົນ, ລວມທັງ ໜ່ວຍງານມາດຕະຖານພາກພື້ນ ຊຶ່ງ ໜ່ວຍງານເຫຼົ່ານັ້ນ, ອາດມີໜຶ່ງ ຫຼື ຫຼາຍໜ່ວຍງານ ພາຍໃນ ອານາເຂດ ເປັນສະມາຊິກຢູ່, ຕ້ອງໄດ້ຍອມຮັບ ແລະ ເຮັດໃຫ້ສອດຄ່ອງກັບ ຫຼັກເກນວ່າດ້ວຍການ ປະຕິບັດທີ່ດີນີ້. ພ້ອມນັ້ນ, ປະເທດສະມາຊິກ ຈະຕ້ອງບໍ່ນຳໃຊ້ມາດຕະການ ຊຶ່ງສົ່ງຜົນກະທົບທາງກົງ ຫຼື ທາງອ້ອມ ໃນການຮຽກຮ້ອງ ຫຼື ຊຸກຍູ້ ໜ່ວຍງານມາດຕະຖານນັ້ນ ປະຕິບັດໃນລັກສະນະ ທີ່ບໍ່ສອດຄ່ອງກັບ ຫຼັກເກນວ່າດ້ວຍການປະຕິບັດທີ່ດີ. ໃນບັນຫາກ່ຽວກັບຄວາມສອດຄ່ອງລະຫວ່າງ ບັນດາ ໜ່ວຍງານມາດຕະຖານ ໃນບົດບັນຍັດຂອງ ຫຼັກເກນວ່າດ້ວຍການປະຕິບັດທີ່ດີ, ຂໍ້ບັງຄັບຂອງບັນດາ ປະເທດ ສະມາຊິກຄວນຈະນຳໃຊ້ ໂດຍບໍ່ຄຳນຶງເຖິງ ວ່າ ໜ່ວຍງານມາດຕະຖານໄດ້ຍອມຮັບ ຫຼັກເກນວ່າດ້ວຍ ການປະຕິບັດທີ່ດີ ຫຼື ບໍ່ກໍຕາມ.

4.2 ປະເທດສະມາຊິກຄວນແຈ້ງໃຫ້ຊາບ ກ່ຽວກັບບັນດາໜ່ວຍງານມາດຕະຖານ ທີ່ໄດ້ຍອມຮັບ ແລະ ເຮັດໃຫ້ສອດຄ່ອງກັບຫຼັກເກນວ່າດ້ວຍການປະຕິບັດທີ່ດີຊຶ່ງແທດເໝາະກັບບັນດາຫຼັກການສຳຄັນ ຂອງສັນຍານີ້.

**ຄວາມສອດຄ່ອງ ກັບ ລະບຽບການທາງດ້ານເຕັກນິກ ແລະ ມາດຕະຖານ**

**ມາດຕາ 5**

**ວິທີການສຳລັບການປະເມີນຄວາມສອດຄ່ອງ ໂດຍໜ່ວຍງານຂອງລັດຂັ້ນສູນກາງ**

5.1 ບັນດາປະເທດສະມາຊິກ ຈະຮັບປະກັນວ່າ, ໃນກໍລະນີ ທີ່ ຕ້ອງການການຮັບປະກັນໃນທາງທີ່ສ້າງສັນ ກ່ຽວກັບການປະເມີນຄວາມສອດຄ່ອງ ໃຫ້ແທດເໝາະກັບ ລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານ, ໜ່ວຍງານຂອງລັດຂັ້ນສູນກາງ ຕ້ອງນຳໃຊ້ ບັນດາບົດບັນຍັດດັ່ງລຸ່ມນີ້ ກັບສິນຄ້າທີ່ມີແຫຼ່ງກຳເນີດໃນອານາເຂດຂອງບັນດາປະເທດສະມາຊິກອື່ນ ຄື:

5.1.1 ວິທີການປະເມີນຄວາມສອດຄ່ອງທາງດ້ານເຕັກນິກ ແລະ ມາດຕະຖານແມ່ນຖືກກະກຽມ, ປະກາດໃຊ້ ແລະ ນຳໃຊ້ ເພື່ອອະນຸຍາດໃຫ້ຜູ້ສະໜອງສິນຄ້າທີ່ຄ້າຍຄືກັນ ຊຶ່ງມີແຫຼ່ງກຳເນີດໃນອານາເຂດຂອງປະເທດສະມາຊິກອື່ນ ໄດ້ນຳໃຊ້ວິທີການປະເມີນຄວາມສອດຄ່ອງນີ້ ພາຍໃຕ້ເງື່ອນໄຂ ທີ່ ບໍ່ໜ້ອຍກວ່າ ສິນຄ້າທີ່ ປະເທດສະມາຊິກຜູ້ສະໜອງສິນຄ້າທີ່ຄ້າຍຄືກັນອັນມີແຫຼ່ງກຳເນີດ ພາຍໃນປະເທດຕົນ ຫຼື ມີແຫຼ່ງກຳເນີດມາຈາກປະເທດສະມາຊິກອື່ນໆ ໃນສະພາບການທີ່ປຽບທຽບໄດ້; ການເຂົ້າເຖິງນີ້ ນຳມາຊຶ່ງ ສິດຂອງຜູ້ສະໜອງ ໃນການປະເມີນຄວາມສອດຄ່ອງພາຍໃຕ້ກົດລະບຽບຂອງ ຂັ້ນຕອນ, ລວມທ◌ັງ ວິທີການນີ້ ທີ່ສາມາດເຫັນໄດ້ກ່ອນ, ຄວາມເປັນໄປໄດ້ໃນການໄດ້ຮັບກິດຈະກຳ ການປະເມີນຄວາມສອດຄ່ອງ ທີ່ຖືກຮັບຮອງ ໃນລັກສະນະຂອງການອຳນວຍຄວາມສະດວກ ແລະ ມີສິດເພື່ອຮັບ ກາຈ້ຳ ຂອງລະບົບ.

5.1.2 ວິທີການປະເມີນຄວາມສອດຄ່ອງທາງດ້ານເຕັກນິກ ແລະ ມາດຕະຖານ ແມ່ນບໍ່ຖືກກະກຽມ, ປະກາດໃຊ້ ແລະ ນຳໃຊ້ ໃນລັກສະນະ ຫຼື ທີ່ເປັນຜົນກະທົບ ໂດຍການສ້າງ ອຸປະສັກອັນບໍ່ຈຳເປັນຕໍ່ການຄ້າລະຫວ່າງປະເທດ. ສິ່ງນີ້ໝາຍຄວາມວ່າ ວິທີການປະເມີນຄວາມສອດຄ່ອງ ບໍ່ຄວນເຂັ້ມງວດເກີນກວ່າ ຫຼື ຖືກນຳໃຊ້ຢ່າງເຂັ້ມງວດກວ່າ ຄວາມຈຳເປັນ ໃນການໃຫ້ປະເທດນຳເຂົ້າ ມີຄວາມເຊື່ອໝັ້ນພຽງພໍ ທີ່ສິນຄ້າໄດ້ສອດຄ່ອງກັບ ລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານທີ່ວາງໄວ້, ໂດຍໃຫ້ຄວາມສຳຄັນຕໍ່ຄວາມສ່ຽງທີ່ອາດເກີດຂຶ້ນຫາກບໍ່ປະຕິບັດຕາມ.

5.2 ໃນເວລາຈັດຕັ້ງປະຕິບັດ ຕາມບົດບັນຍັດໃນວັກທີ 1, ບັນດາປະເທດສະມາຊິກ ຈະຕ້ອງ ຮັບປະກັນວ່າ:

5.2.1 ການປະເມີນຄວາມສອດຄ່ອງທາງດ້ານເຕັກນິກ ແລະ ມາດຕະຖານ ແມ່ນຈະຖືກ ຮັບຮອງ ແລະ ເຮັດໃຫ້ສຳເລັດໄວເທົ່າທີ່ຈະເປັນໄປໄດ້ ແລະ ໃຫ້ຄວາມອະນຸເຄາະແກ່ ສິນຄ້າທີ່ມີແຫຼ່ງກຳເນີດໃນອານາເຂດປະເທດສະມາຊິກອື່ນ ບໍ່ໜ້ອຍກວ່າສິນຄ້າທີ່ຄ້າຍຄືກັນຂອງ ປະເທດຕົນ;

5.2.2 ໄລຍະເວລາຂອງຂະບວນການ ໃນແຕ່ລະວິທີການປະເມີນຄວາມສອດຄ່ອງທາງດ້ານມາດຕະຖານ ໄດ້ຖືກພິມເຜີຍແຜ່ ຫຼື ໄລຍະເວລາຂອງຂະບວນການ ທີ່ຄາດໄວ້ລ່ວງໜ້າ ແມ່ນໄດ້ ແຈ້ງບອກໃຫ້ຜູ້ຮ້ອງຂໍຊາບ. ໂດຍອີງໃສ່ການຮ້ອງຂໍ, ໜ່ວຍງານທີ່ມີຄວາມສາມາດ ກວດກາ ຄວາມຮຽບຮ້ອຍຂອງເອກະສານ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ໃນລັກສະນະຈະແຈ້ງ ແລະ ຄົບຖ້ວນສົມບູນກ່ຽວກັບຂໍ້ບົກພ່ອງທຸກຢ່າງ; ໜ່ວຍງານທີ່ມີຄວາມສາມາດ ສົ່ງຜົນຂອງ ການປະເມີນຄວາມສອດຄ່ອງໃຫ້ຊາບ ໄວເທົ່າທີ່ຈະໄວໄດ້ ໃນຮູບແບບທີ່ຈະແຈ້ງ ແລະ ຄົບ ຖ້ວນສົມບູນ ໃຫ້ກັບຜູ້ຮ້ອງຂໍ, ເພື່ອໃຫ້ສາມາດດຳເນີນການແກ້ໄຂໄດ້ ຫາກມີຄວາມຈຳເປັນ; ເຖິງແມ່ນວ່າ ການສະເໜີຂໍຫາກມີຂໍ້ບົກພ່ອງ, ໜ່ວຍງານທີ່ມີຄວາມສາມາດຕ້ອງດຳເນີນການຕໍ່ ໃນການປະຕິບັດການ ປະເມີນຄວາມສອດຄ່ອງ ຖ້າຫາກຜູ້ສະເໜີຮ້ອງຂ◌ໍ, ແລະ ອີງຕາມການຮ້ອງຂໍ, ຜູ້ສະເໜີ ຈະໄດ້ຮັບແຈ້ງ ກ່ຽວກັບ ຂັ້ນຕອນຂອງລະບຽບການທ◌ັງໝົດ ໂດຍ ມີການອະທິບາຍຖ້າຫາກມີການຊັກຊ້າ;

5.2.3 ຄວາມຮຽກຮ້ອງຕ້ອງການທາງດ້ານຂໍ້ມູນຂ່າວສານ ຈະຖືກຈຳກັດສະເພາະ ກ່ຽວກັບສິ່ງທີ່ຈຳເປັນຕໍ່ການ ປະເມີນຄວາມສອດຄ່ອງ ແລະ ການກຳນົດຄ່າທຳນຽມເທົ່ານັ້ນ.

5.2.4 ຄວາມລັບຂອງຂໍ້ມູນ ກ່ຽວກັບສິນຄ້າທີ່ມີແຫຼ່ງກຳເນີດໃນອານາເຂດ ຂອງປະເທດ ສະມາຊິກອື່ນ ທີ່ມີຂຶ້ນ ຫຼື ຖືກສະໜອງໃຫ້ຕາມການກ່ຽວຂ້ອງຂອງຂັ້ນຕອນການປະເມີນຄວາມສອດຄ່ອງ ແມ່ນຖືກເຄົາລົບໃນລັກສະນະດຽວກັນກັບສິນຄ້າພາຍໃນປະເທດ ແລະ ຕ້ອງຖືກ ປົກປ້ອງຕາມລັກສະນະ ຂອງຜົນປະໂຫຍດອັນຊອບທຳທາງດ້ານການຄ້າ;

5.2.5 ຄ່າທຳນຽມໃດກໍຕາມ ທີ່ເກັບ ສ□າລັບການປະເມ◌ີນຄວາມສອດຄ່ອງຂອງສິນຄ້າ ທີ່ມີແຫຼ່ງກຳເນີດໃນອານາເຂດຂອງປະເທດສະມາຊິກອື່ນ ແມ່ນຕ້ອງສະເໝີພາບ ໂດຍອີງໃສ່ ຄ່າທຳນຽມທີ່ເກັບຈາກການປະເມີນຄວາມສອດຄ່ອງ ຂອງສິນຄ້າທີ່ຄ້າຍຄືກັນ ອັນມີແຫຼ່ງກຳເນີດຈາກປະເທດຕົນ ຫຼື ມີແຫຼ່ງກຳເນີດຈາກປະເທດສະມາຊິກອື່ນ, ໂດຍໃຫ້ຄວາມສຳຄັນກ່ຽວກັບການຄົມມະນາຄົມ, ການຂົນສົ່ງ ແລະ ຕົ້ນທຶນອື່ນໆ ທີ່ເກີດຈາກຄວາມແຕກຕ່າງລະຫວ່າງ ສະຖານທີ່ຂອງສິ່ງອຳນວຍຄວາມສະດວກ(ໃນການປະເມີນ) ຂອງຜູ້ສະເໜີ ແລະ ໜ່ວຍງານປະເມີນຄວາມສອດຄ່ອງ;

5.2.6 ສະຖານທີ່ ໃນການນຳໃຊ້ຂັ້ນຕອນການປະເມີນ ຄວາມສອດຄ່ອງ ແລະການຄັດເລືອກຕົວຢ່າງຈະບໍ່ເປັນຕົ້ນເຫດຂອງຄວາມບໍ່ສະດວກທີ່ບໍ່ຈຳເປັນໃຫ້ແກ່ຜູ້ສະເໜີ ຫຼື ໜ່ວຍງານຂອງພວກເຂົາ;

5.2.7 ເມື່ອໃດກໍຕາມທີ່ລັກສະນະສະເພາະຂອງສິນຄ້າ ຖືກປ່ຽນແປງ ຊຶ່ງເປັນຜົນມາຈາກການນຳນົດຂອງຄວາມສອດຄ່ອງ ໃຫ້ເຂົ້າກັບລະບຽບການທາງດ້ານເຕັກນິກ ແລະ ມາດຕະ ຖານ, ຂັ້ນຕອນການປະເມີນຄວາມສອດຄ່ອງສຳລັບສິນຄ້າທີ່ຈະຖືກປ່ຽນແປງນັ້ນ ຈະຖືກ ຈ□າກັດ ໃນການປະເມີນສິ່ງທີ່ຈຳເປັນເພ◌ື◌່ອກຳນົດ ວ່າ ມີຄວາມໝັ້ນໃຈພຽງພໍທີ່ສິນຄ້າຍັງຄົງ ໄດ້ມາດຕະຖານຕາມລະບຽບການທາງດ້ານເຕັກນິກ ແລະ ມາດຕະຖານທີ່ກ່ຽວຂ້ອງ;

5.2.8 ຂັ້ນຕອນ ມີຢູ່ ແມ່ນເພື່ອທົບທວນ ການຮ້ອງຟ້ອງ ກ່ຽວກັບການດຳເນີນງານຂອງ ຂັ້ນຕອນການປະເມີນຄວາມສອດຄ່ອງ ແລະ ເພື່ອດຳເນີນການແກ້ໄຂໃຫ້ຖືກຕ້ອງ ເມື່ອການ ຮ້ອງຟ້ອງນັ້ນ ມີເຫດຜົນອັນສົມຄວນ.

5.3 ບົດບັນຍັດໃນວັກທີ 1 ແລະ 2 ຈະບໍ່ກີດກັນບັນດາປະເທດສະມາຊິກ ໃນການດຳເນີນການກວດສອບສະເພາະທີ່ສົມເຫດຜົນພາຍໃນອານາເຂດຂອງຕົນ.

5.4 ໃນກໍລະນີ ທີ່ຕ້ອງຮັບປະກັນຢ່າງສ້າງສັນ ວ່າ ສິນຄ້າ ສອດຄ່ອງກັບ ລະບຽບການທາງດ◌້ານເຕັກນິກ ຫຼື ມາດຕະຖານ, ແລະ ບັນດາຂໍ້ແນະນຳທີ່ກ່ຽວຂ້ອງ ຫຼື ຄຳເຫັນຕ່າງໆ ທີ່ອອກໂດຍ ໜ່ວຍງານມາດຕະຖານສາກົນທີ່ມີຢູ່ ຫຼື ກຳລັງຈະສຳເລັດອອກມາ, ບັນດາປະເທດສະມາຊິກ ຄວນຮັບປະກັນວ່າ ບັນດາໜ່ວຍງານຂອງລັດຂັ້ນສູນກາງ ນຳໃຊ້ ທັງໝົດ ຫຼື ບາງສ່ວນຂອງຂໍ້ກຳນົດ ຫຼື ບ◌ັນດາຂໍ້ແນະນຳເຫຼົ່ານັ້ນ ເປັນພື້ນຖານສຳລັບຂັ້ນຕອນການປະເມີນຄວາມສອດຄ່ອງ, ຍົກເວັ້ນ ໃນກໍລະນີທີ່ຕ້ອງການອະທິບາຍຕາມການຮ້ອງຂໍວ່າ ຂໍ້ແນະນຳ ຫຼື ຄຳເຫັນຕ່າງໆ ຫຼື ບາງສ່ວນ ແມ່ນບໍ່ເໝາະສົມ ສຳລັບບັນດາ ປະເທດສະມາຊິກທີ່ກ່ຽວຂ້ອງ ດ້ວຍເຫດຜົນກ່ຽວກັບ ຄວາມຮຽກຮ້ອງຕ້ອງການທາງດ້ານຄວາມໝັ້ນຄົງຂອງປະເທດ, ການປົກປ້ອງຈາກການປະຕິບັດທີ່ຫຼອກລວງ, ການປົກປ້ອງສຸຂະພາບຄົນ ຫຼື ຄວາມປອດໄພ, ປົກປ້ອງ ສຸຂະພາບສັດ ຫຼື ພືດພັນ, ຫຼື ສິ່ງແວດລ້ອມ, ປັດໄຈພື້ນຖານກ່ຽວກັບອ◌ຸນຫະພູມ ຫຼື ທາງດ້ານ ພູມສາດ ຫຼື ບັນຫາຫຍຸ້ງຍາກພື້ນຖານທາງດ້ານເຕັກໂນໂລຊີ ຫຼື ພື້ນຖານ ໂຄງລ່າງ.

5.5 ເພື່ອໃຫ້ມີວິທີການປະເມີນຄວາມສອດຄ່ອງ ທີ່ກົມກຽວກັນໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້, ບັນດາປະເທດສະມາຊິກຕ້ອງມີສ່ວນຮ່ວມຢ່າງເຕັມທີ່ໃນການກະກຽມ ໂດຍໜ່ວຍງານມາດຕະຖານສາກົນທີ່ເໝາະສົມ ໃນການໃຫ້ທິດທາງ/ຂໍ້ແນະນຳ ແລະ ຄຳເຫັນສຳລັບວິທີການປະເມີນຄວາມສອດຄ່ອງ ໂດຍອົງການມາດຕະຖານສາກົນທີ່ເໝາະສົມ ພາຍໃຕ້ຂໍ້ຈຳກັດທາງດ້ານຊັບພະຍາກອນຂອງຕົນ.

5.6 ໃນກໍລະນີທີ່ອົງການລະຫວ່າງປະເທດບໍ່ໄດ້ກຳນົດທິດທາງ/ຂໍ້ແນະນຳທີ່ກ່ຽວຂ້ອງ ຫຼື ຄຳເຫັນໄວ້, ຫຼື ເນື້ອໃນທາງດ້ານເຕັກນິກກ່ຽວກັບວິທີການປະເມີນຄວາມສອດຄ່ອງ ບໍ່ສອດຄ່ອງກັບທິດທາງ/ຂໍ້ແນະນຳ ທີ່ກ່ຽວຂ້ອງ ແລະ ຄຳເຫັນ ທີ່ອອກໂດຍອົງການມາດຕະຖານສາກົນ , ແລະຖ້າຫາກວິທີການ ປະເມີນຄວາມສອດຄ່ອງ ອາດຈະສົ່ງຜົນກະທົບຢ່າງສຳຄັນ ຕໍ່ການຄ້າຂອງປະເທດສະມາຊິກອື່ນໆ, ປະເທດສະມາຊິກຈະຕ້ອງ:

5.6.1 ພິມໂຄສະນາປະກາດໃນສື່ພິມຕ່າງໆໃນເວລາອັນຄວນ ກ່ຽວກັບການຈະນຳໃຊ້ລະບຽບ ການ ທາງດ້ານວິທີການປະເມີນຄວາມສອດຄ່ອງ ໃນລັກສະນະທີ່ເຮັດໃຫ້ຜູ້ສົນໃຈຂອງປະເທດສະມາຊິກອື່ນໆ ມີຄວາມຄຸ້ນເຄີຍ.

5.6.2 ແຈ້ງສະມາຊິກອື່ນໆ ຜ່ານກອງເລຂາອົງການການຄ້າໂລກ ກ່ຽວກັບລາຍການສິນຄ້າທີ່ຖືກຄອບຄຸມ ໃນການທີ່ຈະຕ້ອງຜ່ານວິທີການປະເມີນຄວາມສອດຄ່ອງ, ພ້ອມທັງ ການແຈ້ງບອກວັດຖຸປະສົງ ແລະ ເຫດຜົນໂດຍຫຍໍ້. ການແຈ້ງ ລະບຽບການນີ້, ຄວນຈະເກີດຂຶ້ນ ກ່ອນເວລາອັນຄວນ, ເມື່ອຫາກມີການປັບປຸງແກ້ໄຂ ກໍສາມາດເຮັດໄດ້ ແລະ ຄຳເຫັນຕ່າງໆ ນຳມາພິຈາລະນາຕື່ມໄດ້.

5.6.3 ໂດຍອີງໃສ່ການຮ້ອງຂໍ, ສະໜອງລາຍລະອຽດ ຫຼື ສຳເນົາຂອງລະບຽບການທີ່ສະເໜີ ແລະ ເມື່ອໃດທີ່ເປັນໄດ້ໄປ ກໍຊີ້ໃຫ້ເຫັນ ສ່ວນທີ່ແຕກຕ່າງໄປຈາກແນວທາງທີ່ກ່ຽວຂ້ອງ ຫຼື ຄຳເຫັນຕ່າງ ຂອງອົງການມາດຕະຖານສາກົນ.

5.6.4 ໂດຍບໍ່ມີການຈຳແນກ, ຈົ່ງໃຫ້ເວລາອັນສົມເຫດຜົນສຳລັບປະເທດສະມາຊິກອື່ນໆ ໃນການຂຽນຄຳເຫັນເປັນລາຍລັກອັກສອນ, ປຶກສາຫາລື ຄຳເຫັນເຫຼົ່ານີ້ຕາມການຮ້ອງຂໍ, ແລະ ນຳຄຳເຫັນທີ່ເປັນລາຍລັກອັກສອນນີ້ ແລະ ຜົນຂອງການປຶກສາຫາລືມາພິຈາລະນາ.

5.7 ພາຍໃຕ້ບົດບັນຍັດໃນບົດນຳຂອງວັກ 6, ເມື່ອມີບັນຫາຮີບດ່ວນກ່ຽວກັບຄວາມປອດໄພ, ສຸຂະພາບ, ການປົກປ◌້ອງສິ່ງແວດລ້ອມ ຫຼື ຄວາມໝັ້ນຄົງຂອງຊາດເກີດຂຶ້ນ ຫຼື ໄພຄຸກຄາມທີ່ຈະເກີດຂຶ້ນ ກັບປະເທດສະມາຊິກໃດໜຶ່ງ, ປະເທດສະມາຊິກນັ້ນ ອາດຈະ ບໍ່ປະຕິບັດ

ຕາມຂັ້ນຕອນທີ່ລະບຸໄວ້ໃນ ບົດບັນຍັດ ວັກທີ 6 ຖ້າເຫັນວ່າ ມີຄວາມຈຳເປັນ ໂດຍມີເງື່ອນໄຂວ່າ ໃນການປະກາດໃຊ້ລະບຽບການທາງດ້ານເຕັກນິກ ສະມາຊິກຈະຕ້ອງ:

5.7.1 ແຈ້ງການໃຫ້ກັບບັນດາປະເທດສະມາຊິກ ທັນທີ ຜ່ານກອງເລຂາອົງການການຄ້າໂລກ ໂດຍສະເພາະ ແມ່ນລະບຽບວິທີການ ແລະ ລາຍການສິນຄ້າທີ່ຄອບຄຸມ, ພ້ອມກັບ ແຈ້ງວັດຖຸປະສົງ ແລະ ເຫດຜົນໂດຍຫຍໍ້ຂອງລະບຽບການນັ້ນ, ລວມທັງປະເພດຂອງບັນຫາຮີບດ່ວນ;

5.7.2 ໂດຍອີງໃສ່ການຮ້ອງຂໍ, ສະໜອງສຳເນົາເອກະສານ ກ່ຽວກັບ ລະບຽບວິທີການໃຫ້ກັບບັນດາປະເທດ ສະມາຊິກອື່ນໆ.

5.7.3 ໂດຍບໍ່ມີການຈຳແນກ, ຈົ່ງໃຫ້ເວລາອັນສົມເຫດຜົນສຳລັບປະເທດສະມາຊິກອື່ນໆ ໃນການຂຽນຄຳເຫັນເປັນລາຍລັກອັກສອນ, ປຶກສາຫາລື ຄຳເຫັນເຫຼົ່ານີ້ຕາມການຮ້ອງຂໍ, ແລະ ນຳຄຳເຫັນທີ່ເປັນລາຍລັກອັກສອນນີ້ ແລະ ຜົນຂອງການປຶກສາຫາລືມາພິຈາລະນາ.

5.8 ປະເທດສະມາຊິກຕ້ອງຮັບປະກັນວ່າ ທຸກລະບຽບວິທີການປະເມີນຄວາມສອດຄ່ອງ ທີ່ໄດ້ຖືກປະກາດ ໃຊ້ແລ້ວ ຕ້ອງຖືກພິມເຜີຍແຜ່ທັນທີ ຫຼື ບໍ່ດັ່ງນັ້ນ, ຈົ່ງເຮັດໃຫ້ມີໄວ້ໃນລັກສະນະທີ່ຜູ້ສົນໃຈໃນ ປະເທດສະມາຊິກອື່ນໆ ມີຄວາມຄຸ້ນເຄີຍກັບຂໍ້ກຳນົດເຫຼົ່ານັ້ນ.

5.9 ນອກຈາກໃນກໍລະນີທີ່ສຸກເສີນ ໂດຍອີງໃສ່ ວັກ 7, ປະເທດສະມາຊິກຕ້ອງອະນຸຍາດໃຫ້ມີ ໄລຍະເວລາທີ່ສົມເຫດຜົນລະຫວ່າງເວລາການພິມເຜີຍແຜ່ກ່ຽວກັບຄວາມຮຽກຮ້ອງຕ້ອງການໃຫ້ປະຕິບັດ ລະບຽບວິທີການປະເມີນຄວາມສອດຄ່ອງນັ້ນ ແລະ ເວລາທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ເວລາແກ່ຜູ້ຜະລິດໃນປະເທດທີ່ສົ່ງອອກ, ໂດຍສະເພາະ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ, ໃນການປັບປຸງສິນຄ້າ ແລະ ວິທີການຜະລິດເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງປະເທດທີ່ນຳເຂົ້າ.

**ມາດຕາ 6**

**ການຍອມຮັບ ການປະເມີນຄວາມສອດຄ່ອງ ໂດຍອົງການລັດຂັ້ນສູນກາງ**

ໃນສ່ວນທີ່ກ່ຽວກັບອົງການລັດຂັ້ນສູນກາງ:

6.1 ໂດຍປາສະຈາກ ອະຄະຕິ ຕໍ່ ບົດບັນຍັດໃນວັກທີ 3 ແລະ 4, ບັນດາປະເທດສະມາຊິກ ຕ້ອງຮັບປະກັນວ່າ ຜົນຂອງວິທີການປະເມີນຄວາມສອດຄ່ອງໃນປະເທດສະມາຊິກອື່ນ ແມ່ນຖືກຍອມຮັບໄດ້, ເຖິງແມ່ນວ່າ ວິທີການນັ້ນ ຈະແຕກຕ່າງຈາກວິທີການຂອງຕົນ, ໂດຍມີເງື່ອນໄຂວ່າ ພວກເຂົາພໍໃຈກັບວິທີການທີ່ສະເໜີມາ ເພື່ອຮັບປະກັນຄວາມສອດຄ່ອງ ທີ່ແທດເໝາະກັບ ລະບຽບການທາງດ້ານເຕັກນິກ ແລະ ມາດຕະຖານທີ່ເທົ່າທຽມກັນ ກັບ ວິທີການຂອງປະເທດຕົນ. ໂດຍເປັນການຮັບຮູ້ນຳກັນ ວ່າ ການປຶກສາຫາລືລ່ວງໜ້າກ່ຽວກັບບັນຫານີ້ ອາດມີຄວາມຈຳເປັນເພື່ອຄວາມເຂົ້າໃຈທີ່ເພິ່ງພໍໃຈຮ່ວມກັນ,ໂດຍສະເພາະ ແມ່ນ:

6.1.1 ຄວາມສາມາດທາງດ້ານວິຊາການທີ່ມີຢູ່ ແລະ ພຽງພໍ ຂອງໜ່ວຍງານປະເມີນຄວາມສອດຄ່ອງທີ່ກ່ຽວຂ້ອງໃນປະເທດສົ່ງອອກ, ສະນັ້ນ, ຄວາມໝັ້ນໃຈໃນຄວາມເຊື່ອຖືທີ່ຕໍ່ເນື່ອງ ຂອງຜົນການປະເມີນສາມາດເກີດຂຶ້ນໄດ້, ໃນລັກສະນະນີ້, ຄວາມເຫັນພ້ອມໃນການ ພິສູດ, ຕົວຢ່າງ ຜ່ານການຮັບຮອງ, ພ້ອມກັບທິດທາງທີ່ກ່ຽວຂ້ອງ ແລະ ຄຳແນະນຳຕ່າງໆ ທີ່ອອກໂດຍໜ່ວຍງານມາດຕະຖານສາກົນ ຕ້ອງນຳມາພິຈາລະນາ ເປັນເຄື່ອງຊີ້ວັດ ຄວາມອາດສາມາດທາງດ້ານວິຊາການທີ່ພຽງພໍໄດ້.

6.1.2 ຂໍ້ຈຳກັດຂອງການຍອມຮັບ ຜົນຂອງການປະເມີນຄວາມສອດຄ່ອງໃຫ້ກັບສິນຄ້າທີ່ຖືກສ້າງຂຶ້ນໂດຍໜ່ວຍງານທີ່ໄດ້ຮັບມອບໝາຍໃນປະເທດສົ່ງອອກ.

6.2 ບັນດາປະເທດສະມາຊິກຕ້ອງຮັບປະກັນວ່າ ວິທີການປະເມີນຄວາມສອດຄ່ອງ ໄດ້ອະນຸຍາດໃຫ້ການຈັດຕັ້ງປະຕິບັດ ຕາມບົດບັນຍັດໃນວັກທີ 1 ໂດຍອີງໃສ່ການປະຕິບັດຕົວຈິງ.

6.3 ເມື່ອໄດ້ຮັບການຮ້ອງຂໍຈາກບັນດາປະເທດສະມາຊິກອື່ນ, ບັນດາປະເທດສະມາຊິກ ຈະໄດ້ຮັບການສະໜັບສະໜູນຢ່າງເຕັມໃຈທີ່ຈະເຂົ້າຮ່ວມເຈລະຈາເພື່ອເຮັດຂໍ້ຕົກລົງການຍອມຮັບຮ່ວມກັນກ່ຽວກັບ ຜົນຂອງວິທີການປະເມີນຄວາມສອດຄ່ອງຂອງປະເທດສະມາຊິກແຕ່ລະປະເທດ. ປະເທດສະມາຊິກອາດກຳນົດໃຫ້ສັນຍາດັ່ງກ່າວ ເປັນໄປຕາມຫຼັກເກນຂອງວັກທີ 1 ແລະ ໃຫ້ມີຄວາມພໍໃຈຮ່ວມກັນກ່ຽວກັບ ແນວໂນ້ມການອຳນວຍຄວາມສະດວກຕໍ່ການຄ້າສິນຄ້າທີ່ກ່ຽວຂ້ອງຂອງຕົນ.

6.4 ປະເທດສະມາຊິກຈະໄດ ້ຮັບການສະໜັບສະໜູນ ໃຫ້ເປີດໂອກາດໃຫ້ອົງການປະເມີນຄວາມສອດຄ່ອງທີ່ຕັ້ງຢູ່ໃນອະນາເຂດຂອງປະເທດສະມາຊິກອື່ນ ເຂົ້າຮ່ວມໃນວິທີການປະເມີນຄວາມສອດຄ່ອງຂອງຕົນ, ພາຍໃຕ້ເງື່ອນໄຂ ການໃຫ້ຄວາມອະນຸເຄາະບໍ່ດ້ອຍກວ່າທີ່ໃຫ້ກັບອົງການ ທີ່ຕັ້ງຢູ່ພາຍໃນ ອະນາເຂດຂອງຕົນ ຫຼື ອະນາເຂດຂອງປະເທດອື່ນໆ.

**ມາດຕາ 7**

**ວິທີການປະເມີນຄວາມສອດຄ່ອງໂດຍອົງການລັດຂັ້ນທ້ອງຖິ່ນ**

ໃນສ່ວນທີ່ກ່ຽວກັບອົງການລັດຂັ້ນທ້ອງຖິ່ນພາຍໃນອະນາເຂດຂອງຕົນ:

7.1 ປະເທດສະມາຊິກຕ້ອງໃຊ້ມາດຕະການທີ່ສົມເຫດສົມຜ ົນທີ່ມີຢູ່ ເພື່ອທີ່ຈະຮັບປະກັນວ່າ ອົງການເຫຼົ່ານັ້ນ ຈະປະຕິບັດຕາມບົດບັນຍັດມາດຕາ 5 ແລະ ມາດຕາ 6 ນອກຈາກວ່າ ພັນທະທີ່ຕ້ອງແຈ້ງຕາມວັກທີ 5.6.2 ແລະ 5.7.1 ຂອງມາດຕາ 5.

7.2 ປະເທດສະມາຊິກຈະຮັບປະກັນວ່າ ວິທີການປະເມີນຄວາມສອດຄ່ອງຂອງອົງການລັດຂັ້ນທ້ອງຖິ່ນ ຊຶ່ງຢູ່ໃນລະດັບທີ່ຕໍ່າກວ່າອົງການລັດຂັ້ນສູນກາງຂອງປະເທດສະມາຊິກນັ້ນໂດຍກົງ, ໄດ້ຖືກ ແຈ້ງໃຫ ້ຊາບ ໂດຍສອດຄ່ອງກັບບົດບັນຍັດຂອງວັກ 5.6.2 ແລະ 5.7.1 ຂອງມາດຕາ 5; ໂດຍບໍ່ຕ້ອງແຈ້ງເນື້ອໃນທາງດ້ານເຕັກນິກຂອງວິທີການປະເມີນຄວາມສອດຄ່ອງທີ່ຄືກັນກັບ ເນື້ອໃນທີ່ ອົງການລັດຂັ້ນສູນກາງຂອງປະເທດສະມາຊິກ ໄດ້ແຈ້ງວິທີປະເມີນການຕາມຄວາມສອດຄ່ອງແລ້ວ.

7.3 ປະເທດສະມາຊິກ ອາດຈະຕິດຕໍ່ກັບປະເທດສະມາຊິກອື່ນໆ ລວມທັງການແຈ້ງການໃຫ້ຂໍ້ມູນ ຄໍາເຫັນແລະ ການປຶກສາຫາລືຕາມວັກ 5.6 ແລະ 5.7 ຂອງມາດຕາ 5 ໂດຍຜ່ານອົງການລັດຂັ້ນສູນກາງ.

7.4 ປະເທດສະມາຊິກຕ້ອງບໍ່ໃຊ້ມາດຕະການ ຊຶ່ງເປັນການກໍານົດຫຼື ສົ່ງເສີມໃຫ້ອົງການລັດຂັ້ນທ້ອງຖິ່ນພາຍໃນອະນາເຂດຂອງຕົນປະຕິບັດໃນລັກສະນະທີ່ບໍ່ສອດຄ່ອງກັບບົດບັນຍັດຕາມ ມາດຕາ 5 ແລະ 6.

7.5 ປະເທດສະມາຊິກຮັບຜິດຊອບຢ່າງເຕັມທີ່ພາຍໃຕ້ສັນຍານີ້, ສໍາລັບການດໍາເນີນການຕາມ ບົດບັນຍັດທັງໝົດຂອງມາດຕາ 5 ແລະ 6, ປະເທດສະມາຊິກ ຈະຕ້ອງກໍານົດ ແລະ ປະຕິບັດຕາມ ມາດຕະການ ແລະ ກົນໄກຕ່າງໆ ທີ່ເປັນປະໂຫຍດໃນການສະໜັບສະໜູນການດໍາເນີນການຕາມ ບົດບັນຍັດ ມາດຕາ 5 ແລະ 6 ໂດຍອົງການທີ່ນອກເໜືອຈາກອົງການລັດຂັ້ນສູນກາງ.

**ມາດຕາ 8**

**ວິທີການປະເມີນຄວາມສອດຄ່ອງໂດຍອົງການທີ່ບໍ່ແມ່ນຂອງລັດ**

8.1 ປະເທດສະມາຊິກຈະຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນທີ່ມີຢູ່ ເພື່ອຮັບປະກັນວ່າອົງການ ທີ່ບໍ່ແມ່ນຂອງລັດພາຍໃນອະນາເຂດຂອງຕົນ ຊຶ່ງໃຊ້ວິທີການປະເມີນຄວາມສອດຄ່ອງຕາມບົດບັນຍັດ ມາດຕາ 5 ແລະ 6, ຍົກເວັ້ນ ພັນທະ ທີ່ຈະແຈ້ງວິທີການປະເມີນຄວາມສອດຄ່ອງທີ່ສະເໜີໃຊ້, ພ້ອມນັ້ນ, ປະເທດສະມາຊິກ ຕ້ອງບໍ່ໃຊ້ມາດຕະການຊຶ່ງຈະມີຜົນທາງກົງ ແລະ ທາງອ້ອມຕໍ່ການກໍານົດ ຫຼື ສະໜັບສະໜູນໃຫ້ອົງການດັ່ງກ່າວປະຕິບັດໃນລັກສະນະທີ່ບໍ່ສອດຄ່ອງກັບບົດບັນຍັດຂອງ ຂໍ້ 5 ແລະ 6.

8.2 ປະເທດສະມາຊິກຕ້ອງຮັບປະກັນວ່າ ອົງການລັດຂັ້ນສູນກາງຂອງຕົນໃຫ້ຄວາມໄວ້ວາງໃຈຕໍ່ ວິທີການປະເມີນຄວາມສອດຄ່ອງ ໂດຍອົງການທີ່ບໍ່ແມ່ນຂອງລັດ, ຖ້າຫາກອົງການເຫຼົ່ານັ້ນ ປະຕິບັດຕາມບົດບັນຍັດມາດຕາ 5 ແລະ 6, ຍົກເວັ້ນ ພັນທະທີ່ຈະແຈ້ງວິທີການປະເມີນຄວາມສອດຄ່ອງທີ່ສະເໜີໃຊ້.

**ມາດຕາ 9**

**ລະບົບລະຫວ່າງປະເທດ ແລະ ພາກພື້ນ**

9.1 ຫາກຕ້ອງມີການຢືນຢັນການຮັບປະກັນກ່ຽວກັບຄວາມສອດຄ່ອງກັບຂໍ້ບັງຄັບທາງດ້ານເຕັກນິກ ຫຼື ມາດຕະຖານ, ປະເທດສະມາຊິກຈະຕ ້ອງສ້າງຮ່າງ ແລະ ປະກາດໃຊ້ ລະບົບລະຫວ່າງປະເທດກ່ຽວກັບການປະເມີນຄວາມສອດຄ່ອງ ແລະ ເຂົ້າເປັນສະມາຊິກ ຫຼື ເຂົ້າຮ່ວມລະບົບດັ່ງກ່າວ.

9.2 ປະເທດສະມາຊິກ ຈະຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນທີ່ມີຢູ່ ເພື່ອຮັບປະກັນວ່າ ລະບົບ ກ່ຽວກັບການປະເມີນຄວາມສອດຄ່ອງລະຫວ່າງປະເທດ ແລະ ພາກພື້ນ ຊຶ່ງອົງການ ພາຍໃນອະນາເຂດຂອງຕົນເປັນສາມາຊິກ ຫຼື ເຂົ້າຮ່ວມ, ສອດຄ່ອງກັບບົດບັນຍັດ ມາດຕາ 5 ແລະ 6. ພ້ອມນັ້ນ, ປະເທດສະມາຊິກ ຈະບໍ່ໃຊ້ມາດຕະການໃດໆ ຊຶ່ງມີຜົນທາງກົງ ຫຼື ທາງອ້ອມຕໍ່ການກໍານົດ ຫຼື ສະໜັບສະໜູນໃຫ້ລະບົບດັ່ງກ່າວປະຕິບັດໃນລັກສະນະທີ່ບໍ່ສອດຄ່ອງກ ັບບົດບັນຍັດໃດໆ ໃນມາດຕາ 5 ແລະ ມາດຕາ 6.

9.3 ປະເທດສະມາຊິກຕ້ອງຮັບປະກັນວ່າ ອົງການລັດຂັ້ນສູນກາງຂອງຕົນໃຫ້ຄວາມໄວ້ວາງໃຈຕໍ່ລະບົບການປະເມີນຄວາມສອດຄ່ອງລະຫວ່າງປະເທດ ຫຼື ພາກພື້ນ ສະເພາະໃນຂອບເຂດທີ່ ລະບົບເຫຼົ່ານີ້ ສອດຄ່ອງກັບບົດບັນຍັດມາດຕາ 5 ແລະ 6 ທີ່ໃຊ້ຢູ່ເທົ່ານັ້ນ.

## ຂໍ້ມູນແລະການຊ່ວຍເຫຼືອ

### ມາດຕາ 10

### ຂໍ້ມູນກ່ຽວກັບລະບຽບການທາງດ້ານເຕັກນິກ ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ

10.1 ປະເທດສະມາຊິກແຕ່ລະປະເທດຕ້ອງຮັບປະກັນວ່າ ຫ້ອງການປະສານງານຕອບຄຳຖາມທີ່ມີຢູ່ ຕ້ອງສາມາດໃຫ້ຄຳຕອບທັງໝົດຢ່າງມີເຫດຜົນແກ່ປະເທດສະມາຊິກ ແລະ ຜູ້ສົນໃຈໃນປະເທດສະມາຊິກ ອື່ນ, ລວມທັງການໃຫ້ເອກະສານທີ່ກ່ຽວຂ້ອງກັບ:

10.1.1 ລະບຽບການທາງດ້ານເຕັກນິກໃດໆ ທີ່ປະກາດໃຊ້ ຫຼື ສະເໜີໃຫ້ໃຊ້ພາຍໃນອະນາເຂດຂອງຕົນ ໂດຍອົງການລັດຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ, ໂດຍອົງການຈັດຕັ້ງທີ່ບໍ່ແມ່ນລັດ ທີ່ມີອຳນາດທາງດ້ານກົດໝາຍບັງຄັບ ຕາມລະບຽບການທາງດ້ານເຕັກນິກ ຫຼື ໂດຍອົງການມາດຕະຖານພາກພື້ນ ຊຶ່ງອົງການດັ່ງກ່າວເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມ.

10.1.2 ມາດຕະຖານໃດໆ ທີ່ມີການປະກາດໃຊ້ ຫຼື ສະເໜີໃຫ້ໃຊ້ພາຍໃນດິນແດນຂອງຕົນ ໂດຍອົງການລັດຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ ຫຼື ອົງການມາດຕະຖານພາກພື້ນ ຊຶ່ງອົງການ ດັ່ງກ່າວເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມ.

10.1.3 ວິທີການປະເມີນຄວາມສອດຄ່ອງໃດໆ ຫຼື ການສະເໜີໃຫ້ໃຊ້ວິທີການປະເມີນຄວາມສອດຄ່ອງ ຊຶ່ງດຳເນີນການພາຍໃນອະນາເຂດຂອງຕົນໂດຍອົງການລັດຖະບານຂັ້ນ ສູນກາງ ຫຼື ຂັ້ນທ້ອງຖິ່ນ ຫຼື ອົງການທີ່ບໍ່ແມ່ນຂອງລັດ ທີ່ມີອຳນາດທາງດ້ານກົດໝາຍບັງຄັບໃຊ້ ຕາມລະບຽບການທາງດ້ານເຕັກນິກຫຼື ໂດຍອົງການພາກພື້ນຊຶ່ງອົງການດັ່ງກ່າວເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມ.

10.1.4 ການເປັນສະມາຊິກ ແລະ ການເຂົ້າຮ່ວມຂອງປະເທດສະມາຊິກ ຫຼື ອົງການລັດ ຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງພາຍໃນອະນາເຂດຂອງຕົນໃນອົງການມາດຕະຖານ ລະຫວ່າງປະເທດ ແລະ ພາກພື້ນ ແລະ ລະບົບການປະເມີນຄວາມສອດຄ່ອງ, ລວມເຖິງຂໍ້ຕົກລົງລະດັບສອງຝ່າຍ ແລະ ຫຼາຍຝ່າຍຢູ່ໃນຂອບເຂດຂອງສັນຍານີ້ ແລະ ຕ້ອງສາມາດໃຫ້ຂໍ້ມູນທີ່ມີເຫດຜົນທີ່ກ່ຽວກັບບົດບັນຍັດຂອງລະບົບ ແລະ ຂໍ້ຕົກລົງດັ່ງກ່າວດ້ວຍ.

10.1.5 ທີ່ຕັ້ງຂອງໜ່ວຍງານທີ່ຈັດພິມປະກາດຕ່າງໆ ຕາມສັນຍາສະບັບນີ້ ຫຼື ການໃຫ້ຂໍ້ມູນໃນບ່ອນທີ່ສາມາດຮັບຂໍ້ມູນດັ່ງກ່າວໄດ້.

10.1.6 ທີ່ຕັ້ງຂອງຫ້ອງການປະສານງານຕອບຄຳຖາມຕາມທີ່ລະບຸໄວ້ໃນວັກທີ 3

10.2 ຢ່າງໃດກໍຕາມ, ເນື່ອງຈາກເຫດຜົນທາງດ້ານກົດໝາຍ ຫຼື ການບໍລິຫານທີ່ປະເທດສະມາຊິກຈະຕ້ອງຈັດຕັ້ງ ຫ້ອງການປະສານງານຕອບຄຳຖາມຫຼາຍກວ່າ ໜຶ່ງແຫ່ງ. ປະເທດສະມາຊິກນັ້ນ ຈະຕ້ອງແຈ້ງໃຫ້ສະມາຊິກອື່ນຮູ້ເຖິງຂໍ້ມູນທີ່ສົມບູນ ແລະ ປາດສະຈາກຂໍ້ສົງໄສກ່ຽວກັບຂອບເຂດຄວາມຮັບຜິດຊອບຂອງ ຫ້ອງການປະສານງານຕອບຄຳຖາມແຕ່ລະແຫ່ງເຫຼົ່ານີ້. ພ້ອມນັ້ນ, ປະເທດສະມາຊິກ ຈະຮັບປະກັນວ່າ ຄຳຖາມໃດໆ ທີ່ສົ່ງໄປຍັງຫ້ອງການປະສານງານຕອບຄຳຖາມທີ່ບໍ່ຖືກຕ້ອງ ຈະຕ້ອງຖືກສົ່ງໄປຍັງຫ້ອງການປະສານງານຕອບຄຳຖາມທີ່ຖືກຕ້ອງຢ່າງທັນທີ.

10.3 ປະເທດສະມາຊິກແຕ່ລະປະເທດຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນທີ່ກ່າວມານັ້ນ ເທົ່າທີ່ຈະເຮັດໄດ້ ເພື່ອຮັບປະກັນວ່າ ບ່ອນຕອບຄຳຖາມທີ່ມີຢູ່ໜຶ່ງແຫ່ງ ຫຼື ຫຼາຍກວ່າ ສາມາດຕອບຄຳຖາມທີ່ມີເຫດຜົນທັງໝົດຈາກປະເທດສະມາຊິກອື່ນ ແລະ ຜູ້ສົນໃຈຂອງປະເທດສະມາຊິກອື່ນ, ລວມເຖິງ ການ ສະໜອງເອກະສານ ຫຼື ຂໍ້ມູນທີ່ກ່ຽວຂ້ອງວ່າຈະໄດ້ຮັບກ່ຽວກັບ:

10.3.1 ມາດຕະຖານໃດໆ ທີ່ມີການປະກາດໃຊ້ ຫຼື ສະເໜີທີ່ຈະນຳໃຊ້ພາຍໃນອະນາເຂດຂອງຕົນ ໂດຍອົງການມາດຕະຖານທີ່ບໍ່ແມ່ນຂອງລັດ ຫຼື ໂດຍອົງການມາດຕະຖານພາກພື້ນ ຊຶ່ງອົງການເຫຼົ່ານີ້ ເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມ ແລະ

10.3.2 ວິທີການປະເມີນຄວາມສອດຄ່ອງໃດໆ ຫຼື ຂໍ້ສະເໜີວິທີການປະເມີນຄວາມສອດຄ່ອງ ຊຶ່ງມີການປະຕິບັດ ພາຍໃນອະນາເຂດຂອງຕົນ ໂດຍອົງການທີ່ບໍ່ແມ່ນຂອງລັດ ຫຼື ອົງການພາກພື້ນ ຊຶ່ງອົງການດັ່ງກ່າວເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມ.

10.1.4 ການເປັນສະມາຊິກ ແລະ ການເຂົ້າຮ່ວມໃນອົງການທີ່ບໍ່ແມ່ນຂອງລັດທີ່ກ່ຽວຂ້ອງພາຍໃນອະນາເຂດຂອງຕົນ ໃນອົງການມາດຕະຖານລະຫວ່າງປະເທດ ແລະ ພາກພື້ນ ແລະ ລະບົບການປະເມີນຄວາມສອດຄ່ອງ, ລວມເຖິງຂໍ້ຕົກລົງລະດັບສອງ

ຝ່າຍ ແລະ ຫຼາຍຝ່າຍຢູ່ໃນຂອບເຂດຂອງສັນຍານີ້, ປະເທດສະມາຊິກຕ້ອງສາມາດທີ່ຈະໃຫ້ຂໍ້ມູນທີ່ມີເຫດຜົນກ່ຽວກັບບົດບັນຍັດຂອງລະບົບ ແລະ ຂໍ້ຕົກລົງດັ່ງກ່າວດ້ວຍ.

10.4 ປະເທດສະມາຊິກຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນເທົ່າທີ່ມີຢູ່ ເພື່ອຮັບປະກັນວ່າ ສຳເນົາຂອງເອກະສານທີ່ມີການຮ້ອງຂໍໂດຍປະເທດສະມາຊິກອື່ນ ຫຼື ຜູ້ສົນໃຈຂອງປະເທດສະມາຊິກອື່ນ ໂດຍສອດຄ່ອງກັບບົດບັນຍັດໃນສັນຍາສະບັບນີ້ ໂດຍຈະຕ້ອງສົ່ງໃຫ້ໃນລາຄາທີ່ເປັນທຳ (ຫາກຈະຕ້ອງຈ່າຍ) ຊຶ່ງນອກຈາກຕົ້ນທຶນທີ່ແທ້ຈິງໃນການຈັດສົ່ງ ຈະຕ້ອງໃຫ້ຄືກັນກັບທີ່ໃຫ້ແກ່ຄົນໃນຊາດ[1] ຂອງປະເທດ ສະມາຊິກທີ່ກ່ຽວຂ້ອງ ຫຼື ສະມາຊິກອື່ນໆ.

10.5 ຖ້າຫາກໄດ້ຮັບການຮ້ອງຂໍຈາກປະເທດສະມາຊິກ, ສະມາຊິກທີ່ເປັນປະເທດພັດທະນາແລ້ວ ຕ້ອງໃຫ້ເອກະສານເປັນພາສາອັງກິດ ຝຣັ່ງ ຫຼື ແອສປາຍໂຍນ ທີ່ເປັນຄຳແປຂອງເອກະສານເຫຼົ່ານັ້ນ ຫຼື ໃນກໍລະນີທີ່ ເອກະສານມີຈຳນວນຫຼາຍ ກໍເອົາຄຳແປສະຫຼຸບເນື້ອໃນເອກະສານເຫຼົ່ານັ້ນໃຫ້.

10.6 ເມື່ອໄດ້ຮັບແຈ້ງການຕ່າງໆ ພາຍໃຕ້ບົດບັນຍັດຂອງສັນຍາສະບັບນີ້, ກອງເລຂາອົງການການຄ້າໂລກ ຕ້ອງວຽນສຳເນົາແຈ້ງການດັ່ງກ່າວໃຫ້ກັບປະເທດສະມາຊິກທັງໝົດ ແລະ ອົງການມາດຕະຖານລະຫວ່າງປະເທດ ແລະ ອົງການປະເມີນຄວາມສອດຄ່ອງທີ່ສົນໃຈ ແລະແຈ້ງໃຫ້ປະເທດສະມາຊິກ ປະເທດກຳລັງພັດທະນາຮັບຊາບເຖິງແຈ້ງການຕ່າງໆ ທີ່ກ່ຽວຂ້ອງກັບຜະລິດຕະພັນທີ່ປະເທດເຫຼົ່ານີ້ມີຄວາມສົນໃຈເປັນພິເສດ.

10.7 ເມື່ອປະເທດສະມາຊິກໃດ ຫາກເຮັດຂໍ້ຕົກລົງກັບປະເທດອື່ນອີກໃດໜຶ່ງ ຫຼື ກັບຫຼາຍປະເທດໃນເລື່ອງກ່ຽວກັບລະບຽບການທາງດ້ານເຕັກນິກ ມາດຕະຖານ ຫຼື ວິທີການປະເມີນຄວາມສອດຄ່ອງ ຊຶ່ງອາດມີຜົນກະທົບຢ່າງສຳຄັນຕໍ່ການຄ້າ. ຢ່າງໜ້ອຍທີ່ສຸດ ພາຄີສະມາຊິກໜຶ່ງທີ່ເປັນພາຄີຂອງສັນຍາ ຈະຕ້ອງແຈ້ງໃຫ້ສະມາຊິກອື່ນຜ່ານກອງເລຂາອົງການການຄ້າໂລກ ໃຫ້ຮັບຮູ້ເຖິງສິນຄ້າພາຍໃຕ້ສັນຍາ ແລະ ລວມເຖິງການສະຫຼຸບສັນຍາ ເມື່ອໄດ້ຮັບຄຳຮ້ອງຂໍຂອງສະມາຊິກທີ່ກ່ຽວຂ້ອງ ຈະໄດ້ຮັບການສະໜັບ ສະໜູນໃຫ້ເຂົ້າຮ່ວມໃນການປຶກສາຫາລືກັບປະເທດສະມາຊິກອື່ນ ເພື່ອວັດຖຸປະສົງ ໃນການເຂົ້າຮ່ວມ ຂໍ້ຕົກລົງທີ່ຄ້າຍຄືກັນ ຫຼື ກະກຽມເຂົ້າຮ່ວມສັນຍາດັ່ງກ່າວຂອງຕົນ.

10.8 ບໍ່ມີບົດບັນຍັດໃດໃນສັນຍາສະບັບນີ້ ທີ່ມີຄວາມໝາຍວ່າມີການກຳນົດໃຫ້:

10.8.1 ມີການຕີພິມໂຄສະນາເອກະສານໃນພາສາທີ່ຕ່າງຈາກພາສາຂອງປະເທດສະມາຊິກ

10.8.2 ມີການໃຫ້ລາຍລະອຽດ ຫຼື ສຳເນົາຂອງຮ່າງເປັນພາສາທີ່ຕ່າງຈາກພາສາຂອງປະເທດສະມາຊິກ, ຍົກເວັ້ນ ທີ່ລະບຸໄວ້ໃນວັກ 5 ຫຼື

10.8.3 ສະມາຊິກຕ້ອງໃຫ້ຂໍ້ມູນໃດໆ ທີ່ການເປີດເຜີຍອາດຂັດກັບຄວາມຈຳເປັນທາງດ້ານຄວາມໝັ້ນຄົງຂອງປະເທດ.

10.9 ການແຈ້ງໃຫ້ກັບກອງເລຂາອົງການການຄ້າໂລກ ຕ້ອງໃຊ້ພາສາອັງກິດ, ຝຣັ່ງ ຫຼື ແອສປາຍໂຍນ

10.10 ປະເທດສະມາຊິກຕ້ອງມອບໝາຍໃຫ້ໜ່ວຍງານທີ່ມີອຳນາດແຫ່ງດຽວຂອງລັດຂັ້ນສູນກາງ ຊຶ່ງຮັບຜິດຊອບໃນການປະຕິບັດຕາມບົດບັນຍັດທີ່ກ່ຽວກັບການແຈ້ງລະບຽບການຕ່າງໆ ພາຍໃຕ້ສັນຍານີ້ ໃນລະດັບປະເທດ, ຍົກເວັ້ນ ໃນສ່ວນທີ່ລວມຢູ່ໃນພາກຊ້ອນທ້າຍ 3.

10.11 ເຖິງຢ່າງໃດກໍຕາມ, ເນື່ອງຈາກເຫດຜົນທາງດ້ານກົດໝາຍ ຫຼື ການບໍລິຫານຄວາມຮັບຜິດຊອບຕໍ່ວິທີການແຈ້ງຖືກແບ່ງອອກລະຫວ່າງໜ່ວຍງານຂອງລັດຖະບານສອງແຫ່ງ ຫຼື ຫຼາຍກວ່າ, ປະເທດສະມາຊິກທີ່ກ່ຽວຂ້ອງຕ້ອງໃຫ້ຂໍ້ມູນທີ່ສົມບູນແລະບໍ່ກຳກວມກ່ຽວກັບຂອບເຂດຄວາມຮັບຜິດຊອບຂອງໜ່ວຍງານເຫຼົ່ານີ້ແຕ່ລະແຫ່ງໃຫ້ແກ່ປະເທດສະມາຊິກອື່ນໆ.

**ມາດຕາ 11**

**ຄວາມຊ່ວຍເຫຼືອທາງດ້ານວິຊາການແກ່ປະເທດສະມາຊິກອື່ນ**

11.1 ຖ້າຫາກໄດ້ຮັບການຮ້ອງຂໍປະເທດສະມາຊິກ ຕ້ອງໃຫ້ການແນະນຳແກ່ປະເທດສະມາຊິກອື່ນ ໂດຍສະເພາະປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ໃນດ້ານການສ້າງລະບຽບການທາງດ້ານເຕັກນິກ.

---

[1] ໃນກໍລະນີຂອງສະມາຊິກ WTO ທີ່ເປັນອານາເຂດພາສີອາກອນແຍກຕ່າງຫາກ ໃຫ້ຖືກວ່າ "ຄົນໃນຊາດ" ໝາຍເຖິງ ບຸກຄົນທັງບຸກຄົນທຳມະດາ ຫຼື ນິຕິບຸກຄົນ ຊຶ່ງມີພູມລຳເນົາ ຫຼື ມີການສ້າງຕັ້ງບ່ອນປະກອບການອຸດສາຫະກຳ ຫຼື ບ່ອນຄ້າຂາຍທີ່ແທ້ຈິງ ແລະ ມີຜົນໃນເຂດພາສີອາກອນນັ້ນ.

11.2 ຖ້າຫາກໄດ້ຮັບການຮ້ອງຂໍ ປະເທດສະມາຊິກຕ້ອງໃຫ້ການແນະນຳແກ່ປະເທດສະມາຊິກອື່ນ ໂດຍ ສະເພາະປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕາມເງື່ອນໄຂ ທີ່ໄດ້ຕົກລົງຮ່ວມກັນ ກ່ຽວກັບການຈັດຕັ້ງອົງການມາດຕະຖານແຫ່ງຊາດ ແລະ ການເຂົ້າຮ່ວມໃນອົງການມາດຕະຖານລະຫວ່າງປະເທດ ແລະ ສະໜັບສະໜູນໃຫ້ອົງການມາດຕະຖານແຫ່ງຊາດຂອງຕົນດຳເນີນການເຊັ່ນດຽວກັນ.

11.3 ຖ້າຫາກໄດ້ຮັບການຮ້ອງຂໍ ປະເທດສະມາຊິກຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນເທົ່າທີ່ຕົນມີຢູ່ ຫຼື ດຳເນີນການໃຫ້ໜ່ວຍງານທີ່ມີໜ້າທີ່ຄວບຄຸມພາຍໃນອະນາເຂດຂອງຕົນ ໃຫ້ຄຳແນະນຳແກ່ ປະເທດສະມາຊິກອື່ນ ໂດຍສະເພາະປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕາມເງື່ອນໄຂທີ່ໄດ້ຕົກລົງຮ່ວມກັນກ່ຽວກັບ

11.3.1 ການສ້າງຕັ້ງໜ່ວຍງານທີ່ດຳເນີນການຄວບຄຸມ ຫຼື ໜ່ວຍງານທີ່ເຮັດໜ້າທີ່ປະເມີນຄວາມສອດຄ່ອງກ່ຽວກັບລະບຽບການທາງດ້ານເຕັກນິກ ແລະ

11.3.2 ວິທີການທີ່ສາມາດປະຕິບັດຕາມລະບຽບການທາງເຕັກນິກໄດ້ດີທີ່ສຸດ.

11.4 ຖ້າຫາກໄດ້ຮັບການຮ້ອງຂໍ ປະເທດສະມາຊິກຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນເທົ່າທີ່ຕົນມີຢູ່ ເພື່ອໃຫ້ຄຳແນະນຳແກ່ປະເທດສະມາຊິກອື່ນ ໂດຍສະເພາະປະເທດສະມາຊິກທີ່ເປັນປະເທດ ກ□າລັງພັດທະນາ ແລະ ຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕາມເງື່ອນໄຂທີ່ໄດ້ຕົກລົງຮ່ວມກັນກ່ຽວກັບການສ້າງຕັ້ງໜ່ວຍງານປະເມີນຄວາມສອດຄ່ອງ ກ່ຽວກັບມາດຕະຖານ ທີ່ມີການນຳມາໃຊ້ພາຍໃນອະນາເຂດຂອງປະເທດສະມາຊິກທີ່ຮ້ອງຂໍ.

11.5 ຖ້າຫາກໄດ້ຮັບການຮ້ອງຂໍ ປະເທດສະມາຊິກຕ້ອງໃຫ້ຄຳແນະນຳແກ່ປະເທດສະມາຊິກອື່ນ ໂດຍສະເພາະ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕາມເງື່ອນໄຂທີ່ໄດ້ຕົກລົງຮ່ວມກັນກ່ຽວກັບຂັ້ນຕອນທີ່ຕ້ອງດຳເນີນການໂດຍຜູ້ຜະລິດຂອງຕົນ. ຖ້າຫາກຜູ້ຜະລິດ ປະສົງທີ່ຈະເຂົ້າສູ່ລະບົບສຳລັບການປະເມີນຄວາມສອດຄ່ອງທີ່ດຳເນີນການ ໂດຍອົງການຂອງລັດ ຫຼື ອົງການທີ່ບໍ່ແມ່ນຂອງລັດ ພາຍໃນອະນາເຂດຂອງປະເທດສະມາຊິກ ທີ່ໄດ້ຮັບ ຄ□າຮ້ອງຂໍ.

11.6 ຖ້າຫາກໄດ້ຮັບການຮ້ອງຂໍ, ປະເທດສະມາຊິກ ຊຶ່ງເປັນສະມາຊິກ ຫຼື ຜູ້ເຂົ້າຮ່ວມລະບົບການປະເມີນຄວາມສອດຄ່ອງລະຫວ່າງປະເທດ ຫຼື ພາກພື້ນ ຕ້ອງໃຫ້ຄຳແນະນຳແກ່ສະມາຊິກອື່ນ ໂດຍສະເພາະ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການຕາມເງື່ອນໄຂທີ່ໄດ້ຕົກລົງຮ່ວມກັນກ່ຽວກັບການສ້າງຕັ້ງສະຖາບັນ ແລະ ຂອບທາງດ້ານ ກົດໝາຍທີ່ຈະເຮັດໃຫ້ສາມາດປະຕິບັດຕາມພັນທະ ໃນການເປັນສະມາຊິກ ຫຼື ການເຂົ້າຮ່ວມໃນລະບົບດັ່ງກ່າວ.

11.7 ຖ້າຫາກໄດ້ຮັບການຮ້ອງຂໍ ປະເທດສະມາຊິກຕ້ອງສະໜັບສະໜູນອົງການຕ່າງໆ ພາຍໃນ ອະນາເຂດຂອງຕົນ ຊຶ່ງເປັນປະເທດສະມາຊິກ ຫຼື ຜູ້ເຂົ້າຮ່ວມໃນລະບົບການປະເມີນຄວາມສອດຄ່ອງ ລະຫວ່າງປະເທດ ຫຼື ພາກພື້ນ ເພື່ອໃຫ້ການແນະນຳແກ◌່ປະເທດສະມາຊິກອື່ນ ໂດຍສະເພາະ ປະເທດ ສະມາຊິກທີ່ເປັນປະເທດພວມພັດທະນາ ແລະ ຈະຕ້ອງພິຈາລະນາຄຳຮ້ອງຂໍຄວາມຊ່ວຍເຫຼືອທາງດ້ານ ວິຊາການຈາກປະເທດເຫຼົ່ານີ້ກ່ຽວກັບການສ້າງຕັ້ງສະຖາບັນ ຊຶ່ງສາມາດເຮັດໃຫ້ອົງການຕ່າງໆທີ່ກ່ຽວຂ້ອງພາຍໃນອະນາເຂດຂອງຕົນປະຕິບັດຕາມພັນທະ ໃນການເປັນສະມາຊິກ ຫຼື ການເຂົ້າຮ່ວມ.

11.8 ໃນການໃຫ້ຄຳແນະນຳ ແລະ ຄວາມຊ່ວຍເຫຼືອແກ່ປະເທດສະມາຊິກອື່ນ ຕາມທີ່ລະບຸໄວ້ໃນວັກທີ 1 ເຖິງ 7, ປະເທດສະມາຊິກຕ້ອງໃຫ້ຄວາມສຳຄັນເປັນອັນດັບຕົ້ນ (ບຸລິມະສິດ) ຕໍ່ຄວາມຕ້ອງການຂອງປະເທດສະມາຊິກທີ່ພັດທະນາໜ້ອຍທີ່ສຸດ.

## ມາດຕາ 12

## ການປະຕິບັດແບບພິເສດ ແລະ ແຕກຕ່າງແກ່ປະເທດກຳລັງພັດທະນາ

12.1 ປະເທດສະມາຊິກຈະຕ້ອງໃຫ້ການປະຕິບັດແບບພິເສດ ແລະ ແຕກຕ່າງແກ່ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາຕາມສັນຍາສະບ◌ັບນີ້ ໂດຍໃຊ້ບົດບັນຍັດດັ່ງຕໍ່ໄປນີ້, ລວມທັງ ບົດບັນຍັດທີ່ກ່ຽວຂ້ອງໃນຂໍ້ອື່ນໆ ຂອງສັນຍາສະບັບນີ້.

12.2 ປະເທດສະມາຊິກຕ້ອງໃຫ້ຄວາມສຳຄັນທີ່ພິເສດກັບບົດບັນຍັດຂອງສັນຍາສະບັບນີ້ ກ່ຽວກັບສິດ ແລະ ພັນທະຂອງປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ຕ້ອງຄຳນຶງເຖິງຄວາມ ຈຳເປັນພິເສດທາງດ້ານການພັດທະນາ, ການເງິນ ແລະ ການຄ້າຂອງປະເທດສະມາຊິກທີ່ເປັນປະເທດ ກ□າລັງພັດທະນາໃນການປະຕິບັດຕາມສັນຍາສະບັບນີ້ ທັງໃນລະດັບຊາດ ແລະ ໃນການດຳເນີນງານຂອງສະຖາບັນຕ່າງໆ ທີ່ຈັດຕັ້ງຂຶ້ນພາຍໃຕ້ສັນຍາສະບັບນີ້.

12.3 ໃນການຈັດຮ່າງ ແລະ ການນຳໃຊ້ລະບຽບການທາງດ້ານເຕັກນິກ,ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ, ປະເທດສະມາຊິກ ຕ້ອງຄຳນຶງເຖິງຄວາມຈຳເປັນພິເສດທາງດ້ານການ ພັດທະນາການເງິນ ແລະ ການຄ້າຂອງປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ເພື່ອຮັບປະກັນວ່າ ລະບຽບການທາງດ້ານເຕັກນິກ ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ ຈະບໍ່ກໍ່ໃຫ້ເກີດອຸປະສັກ ທີ່ບໍ່ຈຳເປັນຕໍ່ການສົ່ງອອກຂອງປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ.

12.4 ເຖິງວ່າ ມາດຕະຖານລະຫວ່າງປະເທດ, ຂໍ້ແນະນຳ ຫຼື ຄ□າເຫັນຕ່າງໆອາດມີຢູ່ແລ້ວ ກໍຕາມ, ໂດຍສະເພາະ ພາຍໃຕ້ເງື່ອນໄຂທາງດ້ານເຕັກໂນໂລຊີ ແລະ ທາງເສດຖະກິດສັງຄົມ, ປະເທດສະມາຊິກ ຍອມຮັບວ່າ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນານຳໃຊ້ ລະບຽບການທາງດ້ານເຕັກນິກ, ມາດຕະຖານ ຫຼື ວິທີການປະເມີນຄວາມສອດຄ່ອງໄດ້ ໂດຍມີຈຸດມຸ່ງໝາຍເພື່ອຮັກສາ ເຕັກໂນໂລຊີ ແລະ ວິທີການຜະລິດພື້ນເມືອງ ແລະ ຂະບວນການຕ່າງໆ ທີ່ສອດຄ່ອງກັບຄວາມຕ້ອງການດ້ານການພັດທະນາ ຂອງຕົນ. ດັ່ງນັ້ນ, ປະເທດສະມາຊິກຍອມຮັບວ່າ ບໍ່ຄວນຄາດຫວັງທີ່ຈະໃຫ້ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ນຳມາດຕະຖານລະຫວ່າງປະເທດມາເປັນພື້ນຖານ ສຳລັບຂໍ້ກຳນົດທາງດ້ານເຕັກນິກ ຫຼື ມາດຕະຖານຂອງຕົນ, ລວມທັງວິທີການກວດສອບ ຊຶ່ງບໍ່ເໝາະສົມກັບຄວາມຈຳເປັນທາງດ້ານການພັດທະນາ, ການເງິນ ແລະ ການຄ້າຂອງຕົນ.

12.5 ປະເທດສະມາຊິກຕ້ອງໃຊ້ມາດຕະການທີ່ສົມເຫດສົມຜົນເຊັ່ນວ່ານັ້ນເທົ່າທີ່ຕົນມີຢູ່ ເພື່ອຮັບ ປະກັນວ່າ ອົງການມາດຕະຖານລະຫວ່າງປະເທດ ແລະ ລະບົບສຳລັບການປະເມີນຄວາມສອດຄ່ອງ ລະຫວ່າງປະເທດ ຈະຕ້ອງມີການຈັດຕັ້ງ ແລະ ດຳເນີນການໃນທາງທີ່ຈະເປັນການເອື້ອອຳນວຍຄວາມ ສະດວກຕໍ່ການເຂົ້າຮ່ວມເປັນຜູ້ແທນຢ່າງຫ້າວຫັນ ແລະ ທົ່ວເຖິງຂອງອົງການຕ່າງໆ ຂອງປະເທດສະມາຊິກທັງໝົດ ໂດຍຄຳນຶງເຖິງບັນຫາພິເສດຂອງປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ.

12.6 ຖ້າຫາກໄດ້ຮັບການຮ້ອງຂໍຈາກປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ, ປະເທດ ສະມາຊິກຈະໃຊ້ມາດຕະການທີ່ສົມເຫດສົມຜົນເຊັ່ນວ່ານັ້ນ ເທົ່າທີ່ຕົນມີຢູ່ ເພື່ອຮັບປະກັນວ່າ ອົງການມາດຕະຖານລະຫວ່າງປະເທດ ກວດສອບເຖິງຄວາມເປັນໄປໄດ້ຂອງມາດຕະຖານລະຫວ່າງປະເທດຂອງຜະລິດຕະພັນທີ່ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາມີຜ◌ົນປະໂຫຍດເປັນພິເສດ ແລະ ຖ້າຫາກເປັນໄປໄດ້ໃນທາງປະຕິບັດ ກໍຈັດສ້າງມາດຕະຖານລະຫວ່າງປະເທດຂອງຜະລິດຕະພັນດັ່ງກ່າວ.

12.7 ເພື່ອໃຫ້ສອດຄ່ອງກັບບົດບັນຍັດຂອງມາດຕາ 11, ປະເທດສະມາຊິກຕ້ອງໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການແກ່ປະເທດສະມາຊິກປະເທດກຳລັງພັດທະນາ ເພື່ອຮັບປະກັນວ່າ ໃນການຈັດສ້າງ ແລະ ການນຳໃຊ້ ລະບຽບການທາງດ້ານເຕັກນິກ, ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ ຈະບໍ່ກໍ່ໃຫ້ເກີດອຸປະສັກ ທີ່ບໍ່ຈຳເປັນຕໍ່ການຂະຫຍາຍ ແລະ ການຈຳໜ່າຍສິນຄ້າທີ່ມີການສົ່ງອອກຈາກ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ. ໃນການກຳນົດເງື່ອນໄຂຂອງການໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ ຈະຕ້ອງຄຳນຶງເຖິງລະດັບການພັດທະນາຂອງປະເທດສະມາຊິກທີ່ຮ້ອງຂໍ ແລະ ໂດຍສະເພາະຢ່າງຍິ່ງປະເທດສະມາຊິກທີ່ເປ◌ັນປະເທດພັດທະນາໜ້ອຍທີ່ສຸດ.

12.8 ເປັນທີ່ຍອມຮັບວ່າ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາອາດຈະປະສົບບັນຫາ ພິເສດ, ລວມເຖິງບັນຫາທາງດ້ານສະຖາບັນ ແລະ ໂຄງສ້າງ ໃນການກະກຽມແລະການນຳໃຊ້ ລະບຽບການທາງດ້ານເຕັກນິກ, ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ. ນອກຈາກນີ້, ຍັງໃຫ້ການຍອມຮັບອີກວ່າ ຄວາມຈຳເປ◌ັນພິເສດທາງການພັດທະນາ ແລະ ການຄ້າຂອງສະມາຊິກທີ່ເປັນປະເທດກຳລັງພັດທະນາ, ລວມເຖິງລະດັບການພັດທະນາທາງດ້ານເຕັກໂນໂລຊີ ອາດຈະເຮັດໃຫ້ປະເທດເຫຼົ່ານີ້ ບໍ່ສາມາດປະຕິບັດຕາມພັນທະ ຂອງສັນຍາສະບັບນີ້ ຢ່າງເຕັມທີ່ໄດ້. ດັ່ງນັ້ນ, ປະເທດສະມາຊິກຕ້ອງຄຳນຶງເຖິງຄວາມຈິງຂໍ້ນີ້ນຳ, ເນື່ອງຈາກເຫດຜົນດັ່ງນີ້, ເພື່ອຮັບປະກັນວ່າ ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາສາມາດປະຕິບັດຕາມສັນຍາສະບັບນີ້ໄດ້. ຄະນະກຳມະການດ້ານອຸປະສັກ ທາງດ້ານເຕັກນິກຕໍ່ການຄ້າທີ່ກຳນົດໄວ້ໃນມາດຕາ 13 (ອ້າງເຖິງໃນສັນຍາສະບັບນີ້ ວ່າ "ຄະນະກຳມະການ"). ຖ້າຫາກໄດ້ຮັບການຮ້ອງຂໍ ກໍສາມາດທີ່ຈະໃຫ້ຂໍ້ຍົກເວັ້ນຈາກການປະຕິບັດຕາມພັນທະທັງໝົດ ຫຼື ບາງສ່ວນພາຍໃຕ້ສັນຍາສະບັບນີ້ ໂດຍມີການກຳນົດລະອຽດ ແລະ ການຈຳກັດເວລາ. ເມື່ອມີການພິຈາລະນາເຖິງຄຳຮ້ອງດັ່ງກ່າວ, ຄະນະກຳມະການຕ້ອງຄຳນຶງເຖິງບັນຫາພິເສດ ໃນດ້ານການກະກຽມ ແລະ ການນຳໃຊ້ຂໍ້ກຳນົດທາງດ້ານເຕັກນິກ, ມາດຕະຖານ ແລະ ວິທີການປະເມີນຄວາມສອດຄ່ອງ ແລະ ຄວາມຈຳເປັນພິເສດທາງດ້ານການພັດທະນາ ແລະ ການຄ້າຂອງປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ, ລວມເຖິງລະດັບການພັດທະນາທາງດ້ານເຕັກໂນໂລຊີຂອງຕົນ ຊຶ່ງອາດຂັດຂວາງຄວາມ ສາມາດໃນການປະຕິບັດຕາມພັນທະພາຍໃຕ້ສັນຍາສະບັບນີ້ຢ່າງເຕັມທີ່ໂດຍສະເພາະຄະນະກຳມະການ ຕ້ອງຄຳນຶງເຖິງບັນຫາພິເສດຂອງປະເທດສະມາຊິກທີ່ເປັນປະເທດພ◌ັດທະນາໜ້ອຍທີ່ສຸດ.

12.9 ໃນລະຫວ່າງການປຶກສາຫາລື ປະເທດສະມາຊິກທີ່ພັດທະນາແລ້ວ ຕ້ອງເຂົ້າໃຈເຖິງຄວາມຫຍຸ້ງຍາກເປັນພິເສດທີ່ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາປະສົບ ໃນການຈັດສ້າງມາດຕະຖານ ແລະ ລະບຽບ ການທາງດ້ານເຕັກນິກ ແລະ ວິທີການປະເມີນຄວາມ

ສອດຄ່ອງ ແລະ ຄວາມປາດຖະໜາຂອງຕົນທີ່ຈະຊ່ວຍເຫຼືອປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ທີ່ໄດ້ພະຍາຍາມ ດ□າເນີນການຕາມລັກສະນະນີ້. ປະເທດສະມາຊິກທີ່ພັດທະນາແລ້ວ ຕ້ອງຄຳນຶງເຖິງຄວາມຈຳເປັນພິເສດຂອງ ປະເທດກຳລັງພັດທະນາກ່ຽວກັບການເງິນ, ການຄ້າ ແລະ ການພັດທະນາ.

12.10 ຄະນະກຳມະການຕ້ອງກວດກາການໃຫ້ການປະຕິບັດແບບພິເສດ ແລະ ແຕກຕ່າງເປັນປະຈຳຕາມທີ່ກຳນົດໄວ້ໃນສັນຍາສະບັບນີ້ທີ່ໄດ້ໃຫ້ແກ່ປະເທດສະມາຊິກທີ່ເປັນປະເທດກຳລັງພັດທະນາ ທັງໃນລະດັບຊາດ ແລະ ສາກົນ.

## ສະຖາບັນ, ການປຶກສາຫາລື ແລະ ການແກ້ໄຂຂໍ້ຂັດແຍ້ງ

### ມາດຕາ 13

### ຄະນະກຳມະການວ່າດ້ວຍອຸປະສັກທາງດ້ານເຕັກນິກຕໍ່ການຄ້າ

13.1 ໃຫ້ມີການແຕ່ງຕັ້ງຄະນະກຳມະການວ່າດ້ວຍອຸປະສັກທາງດ້ານເຕັກນິກຕໍ່ການຄ້າຂຶ້ນ ແລະ ຕ້ອງປະກອບດ້ວຍຜູ້ແທນຈາກປະເທດສະມາຊິກແຕ່ລະປະເທດ. ຄະນະກຳມະການຈະເລືອກປະທານຂອງຕົນເອງ ແລະ ຕ້ອງຈັດປະຊຸມຕາມຄວາມຈຳເປັນ ແຕ່ຕ້ອງບໍ່ໜ້ອຍກວ່າປີລະໜຶ່ງຄັ້ງ ເພື່ອເປ ີດ ໂອກາດໃຫ້ປະເທດສະມາຊິກໄດ້ປຶກສາຫາລື ໃນເລື່ອງທີ່ກ່ຽວກັບການປະຕິບັດຕາມສັນຍາ ຫຼື ເພື່ອການດຳເນີນການໃຫ້ໄດ້ຕາມວັດຖຸປະສົງ ແລະ ຕ້ອງປະຕິບັດຕາມຄວາມຮັບຜິດຊອບ ຕາມທີ່ກຳນົດໄວ ້ ພາຍໃຕ້ສັນຍາສະບັບນີ້ ຫຼື ຕາມທີ່ກຳນົດໂດຍປະເທດສະມາຊິກ.

13.2 ຄະນະກຳມະການຕ້ອງແຕ່ງຕັ້ງຄະນະເຮັດວຽກ ຫຼື ອົງການອື່ນໆ ທີ່ເໝາະສົມ ເພື່ອດຳເນີນການຕາມຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍຈາກຄະນະກຳມະການ ຕາມບົດບັນຍັດທີ່ກ່ຽວຂ້ອງຂອງສັນຍາສະບັບນີ້.

13.3 ຕ້ອງຮັບຮູ້ວ່າ ຄວນຫຼີກເວັ້ນຄວາມຊ້ຳຊ້ອນທີ່ບໍ່ຈຳເປັນຂອງວຽກງານພາຍໃຕ້ສັນຍາສະບັບນີ້ ກ ັບວຽກງານຂອງລັດໃນອົງການທາງດ້ານເຕັກນິກອື່ນໆ. ຄະນະກຳມະການຕ້ອງພິຈາລະນາບັນຫານີ້ ໂດຍມຸ່ງເນັ້ນທີ່ຈະຫຼຸດຜ່ອນຄວາມຊ້ຳຊ ້ອນໃຫ້ເຫຼືອໜ້ອຍທີ່ສຸດ.

### ມາດຕາ 14

### ການປຶກສາຫາລື ແລະ ການແກ້ໄຂຂໍ້ຂັດແຍ້ງ

14.1 ການປຶກສາຫາລື ແລະ ການແກ້ໄຂຂໍ້ຂັດແຍ້ງກ່ຽວກັບເລື່ອງໃດກໍຕາມ ທີ່ມີຜົນກະທົບຕໍ່ການດຳເນີນການຂອງສັນຍາສະບັບນີ້ ຈະຢູ່ພາຍໃຕ້ຄວາມອຸປະຖຳຂອງອົງການແກ້ໄຂຂໍ້ຂັດແຍ້ງ ແລະ ຈະ ປະຕິບັດຕາມ ລະບຽບການຂອງມາດຕາ 22 ແລະ 23 ຂອງ GATT 1994 ຕາມທີ່ໄດ້ມີການແປຄວາມໝາຍ ແລະ ມີຜົນບັງຄັບໃຊ້ ຕາມຄວາມເຂົ້າໃຈວ່າ ດ້ວຍການແກ້ໄຂຂໍ້ຂັດແຍ້ງໂດຍອະນຸໂລມ.

14.2 ຖ້າຫາກໄດ້ຮັບການຮ້ອງຂໍຈາກຄູ່ກໍລະນີ ຝ່າຍໃດໜຶ່ງທີ່ຂັດແຍ້ງກັນ ຫຼື ຈາກການລິເລີ່ມເບື້ອງ

ຕົ້ນ, ຄະນະຜູ້ພິຈາລະນາ ອາດຈະແຕ່ງຕັ້ງຄະນະຜູ້ຊ່ຽວຊານທາງດ້ານເຕັກນິກຂຶ້ນເພື່ອໃຫ້ການຊ່ວຍເຫຼືອບັນຫາທາງດ້ານເຕັກນິກທີ່ຈຳເປັນຕ້ອງພິຈາລະນາໃນລາຍລະອຽດ ໂດຍຜູ້ຊ່ຽວຊານ.

14.3 ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຕ້ອງປະຕິບັດຕາມວິທີການໃນບົດຊ້ອນທ້າຍ 2

14.4 ບົດບັນຍັດວ່າດ້ວຍການແກ້ໄຂຂໍ້ຂັດແຍ້ງດັ່ງກ່າວຂ້າງຕົ້ນ ສາມາດທີ່ຈະນຳມາໃຊ້ໃນກໍລະນີທີ່ປະເທດສະມາຊິກພິຈາລະນາເຫັນວ່າປະເທດສະມາຊິກອື່ນບໍ່ໄດ້ດຳເນີນການຕາມມາດຕາ 3, 4, 7, 8 ແລະ 9 ໃຫ້ໄດ້ຜົນເປັນທີ່ໜ້າພໍໃຈ ແລະ ຜົນປະໂຫຍດທາງດ້ານການຄ້າຂອງຕົນຖືກຜົນກະທົບຢ່າງຮ້າຍແຮງ. ໃນນີ້, ຜົນທີ່ກ່າວມານັ້ນ ຈະເທົ່າທຽມກັບ ຜົນປະໂຫຍດທີ່ອົງການທີ່ມີບັນຫານັ້ນ ເປັນປະເທດສະມາຊິກ.

### ມາດຕາ 15

### ບົດບັນຍັດສຸດທ້າຍ

***ຂໍ້ສະຫງວນ***

15.1 ບໍ່ອາດມີຂໍ້ສະຫງວນໃນບ ົດບັນຍັດໃດໆ ໃນສັນຍາສະບັບນີ້ ໂດຍປາດສະຈາກການຍິນຍອມ ຂອງປະເທດສະມາຊິກອື່ນ.

*ການທົບທວນ*

15.2 ພາຍຫຼັງຈາກວັນທີ ທີ່ສັນຍາອົງການການຄ້າໂລກມີຜົນບັງຄັບໃຊ້, ປະເທດສະມາຊິກແຕ່ລະປະເທດ ຕ້ອງແຈ້ງຕໍ່ຄະນະກຳມະການ ກ່ຽວກັບມາດຕະການຕ່າງໆທີ່ນຳໃຊ້ຢູ່ ຫຼື ປະຕິບັດ ເພື່ອ ຮັບປະກັນການປະຕິບັດຕາມ ແລະ ການບໍລິຫານສັນຍາສະບັບນີ້. ການປ່ຽນແປງໃດໆ ຂອງມາດຕະການດັ່ງກ່າວໃນພາຍຫຼັງ ຕ້ອງແຈ້ງຕໍ່ຄະນະກຳມະການຊາບ.

15.3 ຄະນະກຳມະການຈະທົບທວນປະຈຳປີ ກ່ຽວກັບການປະຕິບັດຕາມ ແລະ ການດຳເນີນງານຕາມສັນຍາສະບັບນີ້ ໂດຍຄຳນຶງເຖິງວັດຖຸປະສົງດັ່ງກ່າວ.

15.4 ກ່ອນທີ່ຈະສິ້ນສຸດປີທີສາມ ນັບຈາກວັນທີທີ່ ສັນຍາອົງການການຄ້າໂລກ ຈະມີຜົນບັງຄັບໃຊ້ ແລະ ຫຼັງຈາກນັ້ນ ກ່ອນທີ່ຈະສິ້ນສຸດທຸກໆ ສາມປີ, ຄະນະກຳມະການຕ້ອງທົບທວນການດຳເນີນງານ ແລະ ການປະຕິບັດຕາມສັນຍາສະບັບນີ້, ລວມທັງຂໍ້ກຳນົດກ່ຽວກັບຄວາມໂປ່ງໃສ ເພື່ອໃຫ້ຂໍ້ສະເໜີໃນການປ່ຽນແປງສິດ ແລະ ພັນທະ ຂອງສັນຍາສະບັບນີ້ ເທົ່າທີ່ຈຳເປັນ ເພື່ອຮັບປະກັນເຖິງຜົນປະໂຫຍດທາງເສດຖະກິດຮ່ວມກັນ ແລະ ຄວາມສົມດຸນຂອງສິດ ແລະ ພັນທະ ໂດຍບໍ່ສົ່ງຜົນກະທົບຕໍ່ບົດບັນຍັດຂອງມາດຕາ 12. ກ່ຽວກັບປະສົບການທີ່ໄດ້ຮັບຈາກການປະຕິບັດຕາມສັນຍາ, ຄະນະກຳມະການຕ້ອງຍື່ນຂໍ້ສະເໜີການປັບປຸງແກ້ໄຂເນື້ອໃນຂອງສັນຍາສະບັບນີ້ ຕໍ່ ສະພາດ້ານການຄ້າສິນຄ້າ ເມື່ອເຫັນວ່າເໝາະສົມ.

*ພາກຊ້ອນທ້າຍຕ່າງໆ*

15.5 ພາກຊ້ອນທ້າຍຕ່າງໆ ຂອງສັນຍາສະບັບນີ້ ຖືເປັນສ່ວນສຳຄັນສ່ວນໜຶ່ງຂອງສັນຍາສະບັບນີ້.

## ພາກຊ້ອນທ້າຍ 1

ຄຳສັບ ແລະ ຄຳນິຍາມເພື່ອຈຸດປະສົງຂອງສັນຍາສະບັບນີ້

ຄຳສັບຕ່າງໆ ທີ່ປະກົດໃນການພິມຄັ້ງທີ 6 ຂອງໜັງສືແນະນຳ 2 ຂອງ ໄອເອສໂອ/ໄອຊີຊີ [ISO/ICC : 1991] ຄ□າສັບທົ່ວໄປ ແລະ ຄຳນິຍາມກ່ຽວກັບມາດຕະຖານ ແລະ ການດຳເນີນການທີ່ກ່ຽວຂ້ອງເມື່ອໃຊ້ສັນຍາສະບັບນີ້ ຕ້ອງໃຊ້ຄວາມໝາຍດຽວກັບ ຄຳນິຍາມທີ່ກ່າວເຖິງໃນໜັງສືແນະນຳດັ່ງກ່າວ ໂດຍຄຳນຶງເຖິງເລື່ອງການບໍລິການ ທີ່ບໍ່ຢູ່ໃນຂອບເຂດຂອງສັນຍາສະບັບນີ້.

ຢ່າງໃດກໍຕາມ, ເພື່ອຈຸດປະສົງຂອງສັນຍາສະບັບນີ້ ຈະໃຊ້ຄຳນິຍາມດັ່ງຕໍ່ໄປນີ້:

*1. ລະບຽບການທາງດ້ານເຕັກນິກ*

ເອກະສານຊຶ່ງອະທິບາຍກ່ຽວກັບລັກສະນະຜະລິດຕະພັນ ຫຼື ຂະບວນການ ແລະ ວິທີການ ຜະລິດທີ່ກ່ຽວຂ້ອງຂອງຜະລິດຕະພັນນັ້ນ, ລວມເຖິງ ລະບຽບການການຄຸ້ມຄອງທີ່ໃຊ້ຢູ່ ຊຶ່ງເປັນກົດ ຂໍ້ບັງຄັບທີ່ຕ້ອງປະຕິບັດຕາມ ໂດຍອາດຈະລວມ ຫຼື ລະບຸໂດຍສະເພາະເຖິງ ລະບຽບການກ່ຽວກັບການໃຊ້ຖ້ອຍຄຳ, ສັນຍາລັກ, ການບັນຈຸຫີບຫໍ່, ການເຮັດເຄື່ອງໝາຍ ຫຼື ການຕິດກາ (ສະຫຼາກ) ທີ່ໃຊ້ກັບ ຜະລິດຕະພັນ, ຂະບວນການ ຫຼື ວິທີການຜະລິດດ້ວຍ.

*ຄຳອະທິບາຍ*

ຄຳນິຍາມໃນໜັງສືແນະນຳ 2 ຂອງ ໄອເອສໂອ/ໄອຊີຊີ [ISO/ICC : 1991] ຍັງບໍ່ທັນສົມບູນພຽງພໍ, ແຕ່ກໍຢູ່ບົນພື້ນຖານທີ່ເອີ້ນກັນໂດຍທົ່ວໄປວ່າ "ລະບົບທີ່ຕ້ອງພັດທະນາທົ່ວໄປ"

*2. ມາດຕະຖານ*

ເອກະສານທີ່ໄດ້ຮັບຄຳເຫັນດີ ໂດຍອົງການທີ່ເປັນທີ່ຍອມຮັບ ຊຶ່ງລະບຸກົດ ລະບຽບການ, ຂໍ້ແນະນຳ ຫຼື ລັກສະນະຂອງຜະລິດຕະພັນ ຫຼື ຂະບວນການແລະວິທີການຜະລິດທີ່ກ່ຽວຂ້ອງ ຊຶ່ງໃຊ້ກັນທົ່ວໄປ ແລະ ໃຊ້ຢູ່ເລື້ອຍໆ ບໍ່ໄດ້ເປັນກົດຂໍ້ບັງຄັບທ□ີ່ຕ້ອງປະຕິບັດຕາມ

ໂດຍອາດຈະລວມ ຫຼື ລະບຸ ໂດຍສະເພາະ ເຖິງ ລະບຽບການກ່ຽວກັບການໃຊ້ຖ້ອຍຄຳ, ສັນຍາລັກ, ການບັນຈຸຫີບຫໍ່, ການເຮັດເຄື່ອງໝາຍ ຫຼື ການຕິດກາ (ສະຫຼາກ) ທີ່ໃຊ້ກັບຜະລິດຕະພັນ, ຂະບວນການ ຫຼື ວິທີການຜະລິດດ້ວຍ.

*ຄຳອະທິບາຍ*

ຄຳນິຍາມໃນໜັງສືແນະນຳ 2 ຂອງ ໄອເອສໂອ/ໄອຊີຊີ [ISO/ICC] ຄອບຄຸມຜະລິດຕະພັນ, ຂະບວນການ ແລະ ການບໍລິການ. ສັນຍາສະບັບນີ້ ໃຊ້ກັບ ລະບຽບການດ້ານເຕັກນິກ, ມາດຕະຖານ ແລະ ລະບຽບການປະເມີນຄວາມສອດຄ່ອງທີ່ກ່ຽວກັບຜະລິດຕະພັນ ຫຼື ຂະບວນການ ແລະ ວິທີການ ຜະລິດເທົ່ານັ້ນ. ມາດຕະຖານທີ່ກຳນົດ ໃນໜັງສືແນະນຳ 2 ຂອງ [ISO/ICC] ອາດເປັນທີ່ບັງຄັບ ຫຼື ໂດຍຄວາມສະໝັກໃຈ ເພື່ອຈຸດປະສົງຂອງສັນຍາສະບັບນີ້. ມາດຕະຖານ ເປັນການກຳນົດ ໂດຍຄວາມ ສະໝັກໃຈ ແລະ ລະບຽບການດ້ານເຕັກນິກເປັນເອກະສານທີ່ມີ ຜົນເປັນການບັງຄັບມາດຕະຖານທີ່ມີການກະກຽມ ໂດຍອົງການມາດຕະຖານລະຫວ່າງປະເທດ ບົນພື້ນຖານຂອງມະຕິເອກະພາບ. ສັນຍາ ສະບັບນີ້ ຍັງຄອບຄຸມໄປເຖິງເອກະສານທີ່ບໍ່ໄດ້ຢູ່ບົນພື້ນຖານຂອງມະຕິເອກະພາບອີກດ້ວຍ.

3. *ວິທີການປະເມີນຄວາມສອດຄ່ອງ*

ການໃຊ້ລະບຽບການໃດໆ ທັງທາງກົງ ຫຼື ທາງອ້ອມ ເພື່ອກຳນົດວ່າໄດ້ມີ ການປະຕິບັດຕາມຂໍ້ກຳນົດທີ່ກ່ຽວຂ້ອງກັບ ລະບຽບການດ້ານເຕັກນິກ ຫຼື ມາດຕະຖານ.

*ຄຳອະທິບາຍ*

ວິທີການປະເມີນຄວາມສອດຄ່ອງທາງດ້ານເຕັກນິກ, ວິທີການສຳລັບການສຸ່ມຕົວຢ່າງ ການທົດສອບ ແລະ ການກວດກາ ການປະເມີນ, ການພິສູດຄວາມຖືກຕ້ອງ ແລະ ການຮັບຮອງຄວາມສອດຄ່ອງ, ການຈົດທະບຽນການຮັບຮອງເປັນທາງການແລະໃຫ້ການຍອມຮັບ ລວມທັງການໃຊ້ວິທີທັງສອງຮ່ວມກັນ.

4. *ອົງການ ຫຼື ລະບົບລະຫວ່າງປະເທດ*

ອົງການ ຫຼື ລະບົບຊຶ່ງ ມີສະຖານະເປັນສະມາຊິກ ເປີດໃຫ້ແກ່ອົງການທີ່ກ່ຽວຂ້ອງຂອງປະເທດສະມາຊິກ ທັງໝົດເປັນຢ່າງໜ້ອຍ.

5. *ອົງການ ຫຼື ລະບົບໃນພາກພື້ນ*

ອົງການ ຫຼື ລະບົບ ຊຶ່ງ ມີສະຖານະເປັນສະມາຊິກ ເປີດໃຫ້ແກ່ອົງການທີ່ກ່ຽວຂ້ອງຂອງປະເທດສະມາຊິກບາງປະເທດເທົ່ານັ້ນ.

6. *ອົງການລັດຂັ້ນສູນກາງ*

ອົງການລັດຂັ້ນສູນກາງ ກະຊວງ ແລະ ກົມຕ່າງໆ ຫຼື ອົງການໃດໆ ກໍຕາມທີ່ຢູ່ໃນການຄຸ້ມຄອງຂອງລັດຂັ້ນສູນກາງ ໃນສ່ວນທີ່ກ່ຽວຂ້ອງກັບ ກິດຈະກຳ ທີ່ກ່າວມາ

*ຄຳອະທິບາຍ*

ໃນກໍລະນີ ປະຊາຄົມເອີຣົບ ຈະໃຊ້ບົດບັນຍັດທີ່ຄອບຄຸມອົງການລັດຖະບານຂັ້ນສູນກາງ. ຢ່າງໃດກໍຕາມ, ອາດຈະມີການຈັດຕັ້ງອົງການ ພາກພື້ນ ຫຼື ລະບົບການປະເມີນຄວາມສອດຄ່ອງພາຍໃນ ປະຊາຄົມເອີຣົບ ແລະ ໃນກໍລະນີດັ່ງກ່າວ ຕ້ອງປະຕິບັດຕາມບົດບັນຍັດຂອງສັນຍາສະບັບນີ້ ທີ່ກ່ຽວກັບອົງການ ຫຼື ລະບົບການປະເມີນຄວາມສອດຄ່ອງໃນພາກພື້ນ.

7. *ອົງການລັດທ້ອງຖິ່ນ*

ອົງການລັດນອກເໜືອຈາກອົງການລັດຂັ້ນສູນກາງ (ຕົວຢ່າງ ເຊັ່ນ: ລັດ, ແຂວງ, ມົນລະລັດ, ມົນທົນ, ເທສະບານ ໆລໆ). ກະຊວງ ຫຼື ກົມ ຫຼື ອົງການໃດໆກໍຕາມ ທີ່ຂຶ້ນຢູ່ໃນການຄຸ້ມຄອງຂອງອົງການລັດຂັ້ນດັ່ງກ່າວໃນສ່ວນທີ່ກ່ຽວກັບ ກິດຈະກຳທີ່ກ່າວມາ

8. *ອົງການທີ່ບໍ່ແມ່ນຂອງລັດ*

ອົງການທີ່ນອກເໜືອຈາກອົງການລັດຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ, ລວມເຖິງ ອົງການທີ່ບໍ່ແມ່ນຂອງລັດ ຊຶ່ງມີອຳນາດຕາມກົດໝາຍນຳໃຊ້ ລະບຽບການທາງດ້ານເຕັກນິກ.

## **ບົດຊ້ອນທ້າຍ 2**

ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ

ວິທີການຕໍ່ໄປນີ້ ຈະໃຊ້ໃນການແຕ່ງຕັ້ງ ຄະນະຜູ້ຊ່ຽວຊານຕາມບົດບັນຍັດມາດຕາ 14

1. ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກຢູ່ພາຍໃຕ້ການເບິ່ງແຍງ ຂອງຄະນະຜູ້ພິຈາລະນາ. ຄະນະຜູ້ພິຈາລະນາຈະເປັນຜູ້ກຳນົດອຳນາດໜ້າທີ່ຄວາມຮັບຜິດຊອບ ແລະ ລາຍລະອຽດວິທີການເຮັດວຽກ ແລະ ຄະນະຜູ້ຊ່ຽວຊານຕ້ອງລາຍງານຕໍ່ຄະນະຜູ້ພິຈາລະນາ.

2. ການເຂົ້າຮ່ວມເປັນຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຕ້ອງຈຳກັດສະເພາະບຸກຄົນທີ່ມີອາຊີບ ແລະ ປະສົບການໃນບັນຫາດັ່ງກ່າວ.

3. ພົນລະເມືອງຂອງຄູ່ກໍລະນີບໍ່ສາມາດເຂົ້າຮ່ວມເຮັດວຽກໃນຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຫາກບໍ່ມີການຕົກລົງຮ່ວມກັນຂອງຄູ່ກໍລະນີກ່ຽວຂ້ອງ, ຍົກເວັ້ນ ໃນສະຖານະການພິເສດ ເມື່ອຄະນະຜູ້ ພິຈາລະນາ ພິຈາລະນາເຫັນວ່າ ຫາກບໍ່ມີຜູ້ຊ່ຽວຊານທາງດ້ານວິທະຍາສາດສະເພາະດ້ານ ຈະບໍ່ສາມາດປະຕິບັດງານໄດ້. ເຈົ້າໜ້າທີ່ຂອງລັດຖະບານຄູ່ກໍລະນີຂັດແຍ້ງ ຈະບໍ່ເຂົ້າຮ່ວມໃນຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ, ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກຕ້ອງເຮັດວຽກໃນຖານະຕົນເອງ ແລະ ບໍ່ແມ່ນເປັນຜູ້ແທນຂອງລັດ ຫຼື ເປັນຜູ້ແທນຂອງອົງການໃດໆ. ດັ່ງນັ້ນ, ລັດຖະບານ ຫຼື ອົງການບໍ່ສາມາດອອກຄຳສັ່ງຕໍ່ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກໃນເລື່ອງທີ່ເປັນຂໍ້ຂັດແຍ້ງໄດ້.

4. ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ອາດຈະປຶກສາຫາລື ແລະ ຫາຂໍ້ມູນ ແລະ ຄຳແນະນຳທາງດ້ານເຕັກນິກຈາກແຫຼ່ງໃດໆ ທີ່ຄະນະດັ່ງກ່າວ ເຫັນວ່າເໝາະສົມ ກ່ອນທີ່ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກຈະຫາຂໍ້ມູນດັ່ງກ່າວ ຫຼື ຄຳແນະນຳຈາກແຫຼ່ງພາຍໃນເຂດອຳນາດຂອງປະເທດສະມາຊິກ ຈະຕ້ອງແຈ້ງຕໍ່ລັດຖະບານຂອງປະເທດສະມາຊິກນັ້ນຮັບຊາບ. ປະເທດສະມາຊິກໃດໆ ຕ້ອງຕອບໂດຍທັນທີ ແລະ ເຕັມທີ່, ຖ້າຫາກໄດ້ຮັບການຮ້ອງຂໍຈາກ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ສຳລັບການສະໜອງ ຂໍ້ມູນດັ່ງກ່າວ ຊຶ່ງ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ພິຈາລະນາເຫັນວ່າ ຈຳເປັນແລະເໝາະສົມ.

5. ຄູ່ກໍລະນີຂັດແຍ້ງ ຕ້ອງສາມາດເຂົ້າເຖິງຂໍ້ມູນທັງໝົດທີ່ໃຫ້ຕໍ່ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ, ຖ້າບໍ່ແມ່ນຂໍ້ມູນທີ່ເປັນຄວາມລັບ. ຂໍ້ມູນທີ່ເປັນຄວາມລັບທີ່ໃຫ້ຕໍ່ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຕ້ອງບໍ່ມີການເປີດເຜີຍ ໂດຍບໍ່ໄດ້ຮັບມອບອຳນາດຢ່າງເປັນທາງການຈາກລັດຖະບານ, ອົງການ ຫຼື ບຸກຄົນທີ່ໃຫ້ຂໍ້ມູນ. ໃນກໍລະນີທີ່ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຮ້ອງຂໍຂໍ້ມູນດັ່ງກ່າວ, ແຕ່ ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກບໍ່ໄດ້ຮັບມອບອຳນາດໃຫ້ເປີດເຜີຍຂໍ້ມູນດັ່ງກ່າວ, ລັດຖະບານ, ອົງການ ຫຼື ບຸກຄົນທີ່ໃຫ້ຂໍ້ມູນຈະຕ້ອງສັງລວມໃຫ້ແຕ່ຂໍ້ມູນທີ່ບໍ່ເປັນຄວາມລັບ.

6. ຄະນະຜູ້ຊ່ຽວຊານທາງດ້ານເຕັກນິກ ຕ້ອງຍື່ນຮ່າງລາຍງານ ຕໍ່ປະເທດສະມາຊິກທີ່ກ່ຽວຂ້ອງ ເພື່ອໃຫ້ຮັບຊາບກ່ຽວກັບຄຳເຫັນ ແລະ ນຳໄປພິຈາລະນາຄວາມເໝາະສົມໃນບົດລາຍງານສຸດທ້າຍ ຊຶ່ງຕ້ອງແຈ້ງໃຫ້ປະເທດສະມາຊິກອື່ນທີ່ກ່ຽວຂ້ອງ ເມື່ອມີການຍື່ນຕໍ່ຄະນະຜູ້ພິຈາລະນາ.

## **ບົດຊ້ອນທ້າຍ 3**

ຫຼັກເກນວ່າດ້ວຍ ການປະຕິບັດທີ່ດີ ສຳລັບການກະກຽມການປະກາດໃຊ້ ແລະ ການນຳໃຊ້ທາງດ້ານມາດຕະຖານ

ບົດບັນຍັດທົ່ວໄປ

ກ. ເພື່ອຈຸດປະສົງຂອງຫຼັກເກນນີ້ ຕ້ອງໃຊ້ຄຳນິຍາມໃນບົດຊ້ອນທ້າຍ 1 ຂອງສັນຍາສະບັບນີ້.

ຂ. ຫຼັກການນີ້ ຈະເປີດໃຫ້ມີການຍອມຮັບໂດຍອົງການມາດຕະຖານໃດໜຶ່ງ ພາຍໃນອະນາເຂດຂອງປະເທດສະມາຊິກອົງການການຄ້າໂລກ, ບໍ່ວ່າ ຈະເປັນອົງການລັດຂັ້ນສູນກາງ, ອົງການລັດຂັ້ນທ້ອງຖິ່ນ ຫຼື ອົງການທີ່ບໍ່ແມ່ນຂອງລັດ. ອົງການກຳນົດມາດຕະຖານຂອງລັດຖະບານໃນສ່ວນພາກພື້ນທີ່ ລັດຖະບານຂອງປະເທດສະມາຊິກໜຶ່ງ ຫຼື ຫຼາຍກວ່າ ຊຶ່ງລັດຖະບານຂອງປະເທດສະມາຊິກໜຶ່ງ ຫຼື ຫຼາຍກວ່າເປັນປະເທດສະມາຊິກອົງການການຄ້າໂລກແລະ ອົງການກຳນົດມາດຕະຖານໃນສ່ວນພາກພື້ນ ທີ່ບໍ່ແມ່ນຂອງລັດຕັ້ງຢູ່ພາຍໃນອະນາເຂດຂອງປະເທດສະມາຊິກອົງການການຄ້າໂລກ (ອ້າງເຖິງໃນຫຼັກເກນນີ້ ໂດຍລວມວ່າ “ອົງການກຳນົດມາດຕະຖານຕ່າງໆ” ແລະ ອ້າງເຖິງໂດຍສະເພາະ ແຕ່ລະ ກໍລະນີວ່າ: “ອົງການກຳນົດມາດຕະຖານ”)

ຄ. ອົງການກຳນົດມາດຕະຖານຕ່າງໆ ທີ່ຍອມຮັບ ຫຼື ຖອນຕົວຈາກຫຼັກເກນນີ້ຕ້ອງແຈ້ງຄວາມຈິງຕໍ່ ສູນຂໍ້ມູນ ISO/ICC ທີ່ ເຊີແນວ. ການແຈ້ງຕ້ອງລວມເຖິງຊື່ ແລະ ທີ່ຕັ້ງຂອງອົງການທີ່ກ່ຽວຂ້ອງ ແລະ ຂອບເຂດຂອງກິດຈະກຳມາດຕະຖານໃນປັດຈຸບັນ ແລະ ທີ່ຈະປະຕິບັດຕໍ່ໄປ. ການແຈ້ງອາດຈະສົ່ງໂດຍກົງ ເຖິງສູນຂໍ້ມູນຂອງ ISO/ICC ຫຼື ທາງທີ່ດີ ຄວນຜ່ານປະເທດ ສະມາຊິກທີ່ກ່ຽວຂ້ອງ ຫຼື ຕາໜ່າງລະຫວ່າງປະເທດ ຂອງ ໄອໄຊເນັດ ຕາມຄວາມເໝາະສົມ.

**ບົດບັນຍັດທີ່ເປັນເນື້ອໃນ**

ງ. ໃນສ່ວນທີ່ກ່ຽວຂ້ອງກັບມາດຕະຖານ ອົງການກຳນົດມາດຕະຖານຕ້ອງໃຫ້ການປະຕິບັດຕໍ່ຜະລິດຕະພັນທີ່ມີແຫຼ່ງກຳເນີດໃນອະນາເຂດຂອງປະເທດສະມາຊິກໃດໜຶ່ງ ຂອງອົງການການຄ້າໂລກ ບໍ່ດ້ອຍກວ່າທີ່ໃຫ້ກັບຜະລິດຕະພັນທີ່ຄ້າຍຄືກັນທີ່ມີແຫຼ່ງກຳເນີດໃນຊາດ ແລະ ຜະລິດຕະພັນທີ່ຄ້າຍຄືກັນທີ່ມີແຫຼ່ງກຳເນີດໃນປະເທດໃດໜຶ່ງ.

ຈ. ອົງການກຳນົດມາດຕະຖານຕ້ອງຮັບປະກັນວ່າ ຈະຕ້ອງບໍ່ມີການກະກຽມອອກ ຫຼື ປະກາດໃຊ້ມາດຕະຖານ ເພື່ອ ຫຼື ມີຜົນຕໍ່ການກໍ່ໃຫ້ເກີດອຸປະສັກທີ່ບໍ່ຈຳເປັນທາງດ້ານການຄ້າລະຫວ່າງປະເທດ.

ສ. ໃນກໍລະນີທີ່ມີມາດຕະຖານລະຫວ່າງປະເທດຢູ່ ຫຼື ກຳລັງຈະນຳມາໃຊ້ໃນໄລຍະເວລາອັນໃກ້, ອົງການກຳນົດມາດຕະຖານດັ່ງກ່າວ ຫຼື ສ່ວນທີ່ກ່ຽວຂ້ອງເປັນພື້ນຖານສຳລັບທີ່ຈະພັດທະນາມາດຕະຖານ, ຍົກເວັ້ນໃນກໍລະນີທີ່ມາດຕະຖານລະຫວ່າງປະເທດດັ່ງກ່າວ ຫຼື ສ່ວນທີ່ກ່ຽວຂ້ອງບໍ່ໄດ້ກໍ່ໃຫ້ເກີດຜົນ ຫຼື ບໍ່ເໝາະສົມ ຕົວຢ່າງເຊັ່ນ ເນື່ອງຈາກລະດັບການຄຸ້ມຄອງບໍ່ພຽງພໍ ຫຼື ບົນພື້ນຖານພູມີອາກາດ ຫຼື ປັດໄຈທາງດ້ານພູມສາດ ຫຼື ພື້ນຖານບັນຫາທາງດ້ານເຕັກໂນໂລຊີ.

ຊ. ເພື່ອໃຫ້ມາດຕະຖານມີຄວາມສອດຄ່ອງກັນໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້,ອົງການກຳນົດ ມາດຕະຖານຕ້ອງມີສ່ວນຮ່ວມຢ່າງເຕັມທີ່ແລະເໝາະສົມ ພາຍໃຕ້ຂໍ້ຈຳກັດຂອງຊັບພະຍາກອນຂອງຕົນ ໃນການຈັດສ້າງມາດຕະຖານລະຫວ່າງປະເທດ ກ່ຽວກັບ ເລື່ອງທີ່ອົງການກຳນົດມາດຕະຖານລະຫວ່າງ ປະເທດທີ່ກ່ຽວຂ້ອງໄດ້ອອກ ຫຼື ຄາດວ່າຈະອອກ. ສຳລັບອົງການມາດຕະຖານຕ່າງໆ ພາຍໃນອະນາເຂດຂອງປະເທດສະມາຊິກ, ການເຂົ້າຮ່ວມກິດຈະກຳກຳນົດມາດຕະຖານລະຫວ່າງປະເທດໃດໆ, ຖ້າຫາກເປັນໄປໄດ້, ຕ້ອງຜ່ານຄະນະຜູ້ແທນຊຶ່ງເປັນຕົວແທນຂອງອົງການກຳນົດມາດຕະຖານຕ່າງໆ ທັງໝົດໃນອະນາເຂດທີ່ມີການອອກມາດຕະຖານແລ້ວ ຫຼື ຈະມີການອອກມາດຕະຖານ ຊຶ່ງການກຳນົດມາດຕະຖານລະຫວ່າງປະເທດທີ່ກ່ຽວຂ້ອງກຳລັງດຳເນີນຈັດສ້າງຢູ່.

ຍ. ອົງການກຳນົດມາດຕະຖານພາຍໃນອະນາເຂດຂອງປະເທດສະມາຊິກ ຕ້ອງພະຍາຍາມ ຫຼີກເວັ້ນຄວາມຊໍ້າຊ້ອນຂອງວຽກງານກັບອົງການກຳນົດມາດຕະຖານອື່ນໆ ໃນອະນາເຂດຂອງປະເທດຕົນ ຫຼື ກັບວຽກງານຂອງອົງການກຳນົດມາດຕະຖານລະຫວ່າງປະເທດ ຫຼື ພາກພື້ນຕ່າງໆ ທີ່ກ່ຽວຂ້ອງ. ອົງການ ກຳນົດມາດຕະຖານຕ້ອງພະຍາຍາມ ໃຫ້ການພັດທະນາມາດຕະຖານມີມະຕິເອກະພາບ,ໃນລັກສະນະດຽວກັນ, ໃນອົງການກຳນົດມາດຕະຖານພາກພື້ນຕ້ອງພະຍາຍາມຫຼີກເວັ້ນ ຄວາມຊໍ້າຊ້ອນກັບວຽກງານຂອງອົງການກຳນົດມາດຕະຖານລະຫວ່າງປະເທດຕ່າງໆ ທີ່ກ່ຽວຂ້ອງ.

ດ. ເພື່ອຄວາມເໝາະສົມ, ອົງການກຳນົດມາດຕະຖານ ຈະຕ້ອງລະບຸມາດຕະຖານໂດຍຢູ່ບົນພື້ນຖານຂອງຄຸນສົມບັດຂອງຜະລິດຕະພັນໃນດ້ານການໃຊ້ປະໂຫຍດຫຼາຍກວ່າຮູບແບບ ຫຼື ລັກສະນະພາຍນອກ.

ຕ. ຢ່າງໜ້ອຍທຸກໆ 6 ເດືອນ, ອົງການກຳນົດມາດຕະຖານຕ້ອງຈັດພິມໂຄສະນາ ແຜນການ ດ□າເນີນງານ ຊຶ່ງປະກອບດ້ວຍຊື່, ທີ່ຢູ່ ມາດຕະຖານທີ່ກຳລັງຈັດເຮັດໃນປັດຈຸບັນ ແລະ ມາດຕະຖານທີ່ໄດ້ອອກໄປແລ້ວກ່ອນໜ້ານີ້, ມາດຕະຖານທີ່ຢູ່ລະຫວ່າງການຮ່າງ ນັບຕັ້ງແຕ່ໄດ້ມີການຕັດສິນໃຈທີ່ຈະ ກ□ານົດມາດຕະຖານຈົນຮອດໄດ້ມີການອອກມາດຕະຖານນັ້ນ, ຖ້າຫາກໄດ້ຮັບການຮ້ອງຂໍ, ຊື່ເລື່ອງຂອງຮ່າງມາດຕະຖານສະເພາະ ຈະຕ້ອງແປເປັນພາສາອັງກິດ, ຝຣັ່ງ ຫຼື ແອສປາຍໂຍນ. ຄຳປະກາດແຜນການດຳເນີນງານກິດຈະກຳການກຳນົດມາດຕະຖານທີ່ມີຢູ່ຕ້ອງຈັດພິມເຜີຍແຜ່ໃນປະເທດ ແລະ ໃນບາງກໍລະນີ ອາດເຜີຍແຜ່ໃນລະດັບພາກພື້ນ.

ສຳລັບມາດຕະຖານແຕ່ລະຊະນິດ ແຜນການດຳເນີນງານຕ້ອງລະບຸການແຍກປະເພດຂອງເລື່ອງຕ່າງໆ, ຂັ້ນຕອນໃນການພັດທະນາມາດຕະຖານ ແລະ ການອ້າງອີງມາດຕະຖານລະຫວ່າງປະເທດໃດໆ ທີ່ໃຊ້ເປັນພື້ນຖານ. ທັງນີ້, ໂດຍໃຫ້ສອດຄ່ອງກັບກົດເກນຂອງ ໄອໄຊເນັດດຳເນີນງານ. ອົງການກຳນົດມາດຕະຖານຕ້ອງແຈ້ງແຜນການດຳເນີນງານຂອງຕົນຕໍ່ສູນຂໍ້ມູນ ISO/ICC ທີ່ ເຊີແນວ ກ່ອນທີ່ຈະພິມເຜີຍແຜ່.

ການປະກາດຕ້ອງມີຊື່ ແລະ ທີ່ຢູ່ຂອງອົງການກຳນົດມາດຕະຖານ, ຊື່ ແລະ ເລື່ອງຂອງສິ່ງພິມທີ່ພິມເຜີຍແຜ່ແຜນການດຳເນີນງານ, ໄລຍະເວລາການດຳເນີນງານຂອງແຜນການດຳເນີນງານ, ລາຄາ (ຖ້າຫາກມີ) ແລະ ສາມາດຈະຮັບຂໍ້ມູນໄດ້ແນວໃດ ແລະ ບ່ອນໃດ.

ການແຈ້ງ ອາດຈະສົ່ງໂດຍກົງເຖິງສູນຂໍ້ມູນ ISO/ICC ຫຼື ທາງທີ່ດີ ຄວນຜ່ານປະເທດສະມາຊິກທີ່ກ່ຽວຂ້ອງ ຫຼື ຕາໜ່າງລະຫວ່າງປະເທດຂອງ ໄອໂຊເນັດຕາມຄວາມເໝາະສົມ.

ຖ. ປະເທດສະມາຊິກຂອງ ISO/ICC ຈະຕ້ອງພະຍາຍາມທຸກວິທີທາງທີ່ຈະເປັນສະມາຊິກຂອງ ໄອໂຊເນັດ ຫຼື ແຕ່ງຕັ້ງອົງການອື່ນເປັນສະມາຊິກ ລວມເຖິງ ຖ້າເປັນໄປໄດ້ ໃຫ້ພະຍາຍາມເຂົ້າເປັນ ສະມາຊິກໃນກຸ່ມທີ່ມີຄວາມກ້າວໜ້າຫຼາຍທີ່ສຸດຂອງໄອໂຊເນັດ. ອົງການກຳນົດມາດຕະຖານ ອື່ນໆ ຕ້ອງ ພະຍາຍາມທຸກວິທີທາງທີ່ຈະເຂົ້າໄປກ່ຽວຂ້ອງກັບສະມາຊິກ ໄອໂຊເນັດ.

ທ. ກ່ອນທີ່ຈະມີການອອກມາດຕະຖານ, ອົງການກຳນົດມາດຕະຖານຕ້ອງໃຫ້ເວລາຢ່າງໜ້ອຍ 60 ວັນ ສຳລັບການຍື່ນສະເໜີຄຳເຫັນກ່ຽວກັບຮ່າງມາດຕະຖານໂດຍອົງການທີ່ສົນໃຈພາຍໃນອະນາເຂດຂອງປະເທດ ສະມາຊິກອົງການການຄ້າໂລກ. ຢ່າງໃດກໍ່ຕາມ, ໄລຍະເວລານີ້ອາດຈະສັ້ນຂຶ້ນ ໃນກໍລະນີທີ່ເກີດ ຫຼື ເປັນສິ່ງທີ່ຄຸກຄາມວ່າຈະເກີດບັນຫາເລັ່ງດ່ວນກ່ຽວກັບຄວາມປອດໄພ ສຸຂະພາບ ຫຼື ສິ່ງແວດລ້ອມ. ອົງການກຳນົດມາດຕະຖານຕ້ອງຈັດພິມປະກາດໄລຍະເວລາສຳລັບການສະເໜີຄຳເຫັນໃນສິ່ງພິມ ຕາມທີ່ກ່າວເຖິງໃນວັກ (ດ). ກ່ອນທີ່ຈະເຖິງໄລຍະເວລາການສະເໜີຄຳເຫັນ ການປະກາດດັ່ງກ່າວຕ້ອງສັງລວມ ຮ່າງມາດຕະຖານດັ່ງກ່າວ ແຕກຕ່າງໄປຈາກມາດຕະຖານລະຫວ່າງປະເທດທີ່ກ່ຽວຂ້ອງ ຫຼື ບໍ່ ເທົ່າທີ່ຈະເຮັດໄດ້.

ນ. ຖ້າຫາກໄດ້ຮັບການຮ້ອງຂໍ ຈາກຜູ້ສົນໃຈພາຍໃນອະນາເຂດຂອງປະເທດສະມາຊິກອົງການການຄ້າໂລກ, ອົງການກຳນົດມາດຕະຖານຕ້ອງສະໜອງໃຫ້ ຫຼື ຈັດໃຫ້ສຳເນົາຂອງຮ່າງມາດຕະຖານທີ່ໄດ້ມີການຍື່ນສະເໜີຂໍຄຳເຫັນ ໂດຍທັນທີ. ຄ່າທຳນຽມໃດໆ ທີ່ມີການຈັດເກັບສຳລັບຄ່າບໍລິການນີ້ ຕ້ອງເປັນລາຄາດຽວກັນ ສຳລັບຜູ້ຂໍຕ່າງປະເທດ ແລະ ພາຍໃນປະເທດ ຊຶ່ງບໍ່ລວມຄ່າຂົນສົ່ງທີ່ແທ້ຈິງ.

ບ. ໃນຂະບວນການທີ່ຈະບັນລຸການກຳນົດມາດຕະຖານຂອງອົງການກຳນົດມາດຕະຖານ ຕ້ອງຄຳນຶງເຖິງ ຄວາມເຫັນທີ່ໄດ້ຮັບລະຫວ່າງໄລຍະເວລາສຳລັບການສະເໜີຄຳເຫັນ, ຖ້າຫາກໄດ້ຮັບການຮ້ອງຂໍ, ຈະຕ້ອງຕອບ ໂດຍໄວເທົ່າທີ່ຈະໄວໄດ້ ກ່ຽວກັບຂໍ້ຄິດເຫັນທີ່ໄດ້ຮັບຜ່ານອົງການກຳນົດມາດຕະຖານ ຊຶ່ງຍອມຮັບ ຫຼັກເກນວ່າດ້ວຍການປະຕິບັດທີ່ດີ. ການຕອບນັ້ນ ລວມເຖິງການອະທິບາຍເຖິງຄວາມຈຳເປັນທີ່ແຕກຕ່າງໄປຈາກມາດຕະຖານລະຫວ່າງປະເທດທີ່ກ່ຽວຂ້ອງ.

ປ. ເມື່ອໃດທີ່ມີການອອກມາດຕະຖານແລ້ວ ຈະຕ້ອງມີການຈັດພິມໂດຍທັນທີ.

ຜ. ຖ້າຫາກໄດ້ຮັບການຮ້ອງຂໍຈາກຜູ້ສົນໃຈໃດໆ ພາຍໃນອະນາເຂດຂອງປະເທດສະມາຊິກອົງການການຄ້າໂລກ, ອົງການກຳນົດມາດຕະຖານຕ້ອງດຳເນີນການສະໜອງສຳເນົາແຜນການດຳເນີນງານສະບັບຫຼ້າສຸດ ຫຼື ມາດຕະຖານຊຶ່ງໄດ້ສຳເລັດແລ້ວ. ຄ່າທຳນຽມໃດໆ ທີ່ມີການຈັດເກັບສຳລັບຄ່າບໍລິການນີ້ ຕ້ອງເປັນລາຄາດຽວກັນ ສຳລັບຜູ້ຂໍຕ່າງປະເທດ ແລະ ພາຍໃນປະເທດ ຊຶ່ງບໍ່ລວມຄ່າຂົນສົ່ງທີ່ແທ້ຈິງ.

ຝ. ອົງການກຳນົດມາດຕະຖານຕ້ອງໃຫ້ການພິຈາລະນາດ້ວຍຄວາມເຫັນອົກເຫັນໃຈ ແລະ ໃຫ້ໂອກາດທີ່ພຽງພໍໃນການປຶກສາຫາລືກ່ຽວກັບຄຳຮ້ອງຟ້ອງໃນສ່ວນທີ່ກ່ຽວກັບການດຳເນີນງານຂອງປະມວນນີ້ ຊຶ່ງອົງການກຳນົດມາດຕະຖານທີ່ຍອມຮັບ ຫຼັກເກນການປະຕິບັດທີ່ດີ ເປັນຜູ້ຍື່ນ. ອົງການກຳນົດມາດຕະຖານຕ້ອງມີຄວາມພະຍາຍາມຢ່າງມີເຫດຜົນທີ່ຈະຫາຂໍ້ຍຸດຕິສຳລັບຄຳຮ້ອງຟ້ອງໃດໆ.